# ຫຼັກສູດຜູ້ຮຽນພາສາອັງກິດ
# ປື້ມຄູ່ມືສໍາລັບພໍ່ແມ່




# ຄູ່ມືສໍາລັບໂຮງຮຽນຂອງ U-46

**ເມື່ອ** ພໍ່ແມ່ບໍ່ສາມາດໂອ້ລົມກັບລູກຂອງເຂົາເຈົ້າໄດ້, ພວກເຂົາກໍບໍ່ສາມາດນຳສິ່ງ*ຄ່ານິຍົມ*, *ຄວາມເຊື່ອ*, *ຄວາມເຂົ້າໃຈ*, **ຫຼື** *ຄວາມຮູ້*ຂອງເຂົາເຈົ້າກ່ຽວກັບວິທີຮັບມືກັບປະສົບການຂອງເຂົາເຈົ້າໃຫ້ແກ່ລູກຂອງເຂົາເຈົ້າໄດ້ຢ່າງງ່າຍດາຍ.

ພວກເຂົາບໍ່ສາມາດສອນລູກຂອງເຂົາເຈົ້າກ່ຽວກັບຄວາມໝາຍ ຂອງວຽກ ຫຼື ກ່ຽວກັບຄວາມຮັບຜິດຊອບສ່ວນບຸກຄົນ ຫຼື ມັນໝາຍເຖິງຫຍັງໃນການເປັນຄົນທີ່ມີສິນທຳ ຫຼື ມີຈັນຍາບັນໃນໂລກທີ່ມີຫຼາຍທາງເລືອກເກີນໄປ ແຕ່ມີຄຳແນະນຳໜ້ອຍເກີນໄປໃຫ້ປະຕິບັດຕາມ.  ສິ່ງທີ່ສູນເສຍແມ່ນຄຳແນະນຳ, **consejos** ທີ່ພໍ່ແມ່ຄວນສາມາດສະໜອງໃຫ້ແກ່ເດັກນ້ອຍໄດ້ໃນການສື່ສານທຸກໆວັນກັບເຂົາເຈົ້າ.



ການໂອ້ລົມແມ່ນການເຊື່ອມສຳພັນທີ່ສຳຄັນລະຫວ່າງພໍ່ແມ່ ແລະ ລູກ: ມັນເປັນວິທີທີ່ພໍ່ແມ່ປູກຝັງວັດທະນະທຳຂອງເຂົາເຈົ້າໃຫ້ກັບລູກຂອງເຂົາເຈົ້າ ແລະ ເຮັດໃຫ້ພວກເຂົາສາມາດກາຍເປັນຜູ້ຊາຍ ແລະ ແມ່ຍິງໃນແບບທີ່ພວກເຂົາຕ້ອງການໃຫ້ລູກເປັນ.  ເມື່ອພໍ່ແມ່ສູນເສຍວິທີການສ້າງຄວາມສຳພັນ ແລະ ການມີອິດທິພົນຕໍ່ກັບລູກຂອງເຂົາເຈົ້າ, ການແຕກແຍກກໍເກີດຂຶ້ນ ແລະ ຄອບຄົວຈະສູນເສຍຄວາມໃກ້ຊິດສະໜິດສະໜົມທີ່ເກີດຈາກຄວາມເຊື່ອ ແລະ ຄວາມເຂົ້າໃຈເຊິ່ງກັນແລະກັນ.

***Lily Wong Fillmore***


*ບາງຂໍ້ມູນ ທີ່ລວມຢູ່ໃນປຶ້ມຄູ່ມືຫົວນີ້ ອາດຈະໃຊ້ບໍ່ໄດ້ໃນຊ່ວງການຮຽນທາງໄກ. ກະລຸນາເຂົ້າເບິ່ງເວັບໄຊ U-46 Covid-19* ***https://www.u-46.org/Page/15532***
*ຫລື ຕິດຕໍ່ຫາອາຈານໃຫຍ່ໂຮງຮຽນຂອງທ່ານ ສຳລັບຂໍ້ມູນໃໝ່ໆ.*

# ຂໍ້ມູນຕິດຕໍ່

## ເຂດການສຶກສາ U-46 ໃນເຂດພື້ນທີ່ ELGIN

### ຫ້ອງການການບໍລິການດ້ານການສຶກສາ ELL

ໂທລະສັບ: (847) 888-5000 ຕໍ່ສາຍ 5331 ຫຼື 5332

ແຟັກ: (847) 888-7189

ຕິດຕາມ @U46ELL

ຕິດຕໍ່ພວກເຮົາ

| ຊື່ | ຕໍາແໜ່ງ | ຕໍ່ສາຍ | ອີເມວ |
|---|---|---|---|
| ດຣ. Annette Acevedo | ຜູ້ອໍານວຍການຫຼັກສູດ ELL | ຕໍ່ສາຍ 4282 | annetteacevedo@u-46.org |
| Gustavo Dalal | ຜູ້ປະສານງານຝ່າຍຂໍ້ມູນ ແລະ ການປະຕິບັດຕາມ ELL | ຕໍ່ສາຍ 4281 | gustavodalal@u-46.org |
| Sylvia Rodríguez | ຜູ້ປະສານງານຫຼັກສູດລິເລີ່ມ ELL | ຕໍ່ສາຍ 4278 | sylviarodriguez@u-46.org |
| Mario Pestaña | ຜູ້ປະສານງານຫຼັກສູດລິເລີ່ມ ELL | ຕໍ່ສາຍ 5078 | mariopestana@u-46.org |
| ດຣ. Hilda Rivera | ຜູ້ປະສານງານຫຼັກສູດລິເລີ່ມ ELL | ຕໍ່ສາຍ 4279 | hildarivera@u-46.org |
| María Chamorro | ຄູຝຶກສອນ ELL | ຕໍ່ສາຍ 5331 | mariachamorro@u-46.org |
| Zindya Guerrero | ຄູຝຶກສອນ ELL | ຕໍ່ສາຍ 5331 | zindyaguerrero@u-46.org |
| Sara Robles | ຄູຝຶກສອນ ELL | ຕໍ່ສາຍ 5331 | sararobles@u-46.org |
| Maribel Borja | ຜູ້ຊ່ຽວຊານຝ່າຍການຊ່ວຍເຫຼືອລ້າ ELL | ຕໍ່ສາຍ 7619 | maribelborja@u-46.org |
| Emily Sánchez | ເລຂາ ELL | ຕໍ່ສາຍ 5331 | emilysanchez@u-46.org |
| Delia Alba Gallegos | ເລຂາ ELL | ຕໍ່ສາຍ 5623 | deliaalbagallegos@u-46.org |

## ສູນຕ້ອນຮັບຄອບຄົວ

ໂທລະສັບ: (847) 888-5000 ຕໍ່ສາຍ 6038

ແຟັກ: (847) 888-7189

| ຊື່ | ຕໍາແໜ່ງ | ຕໍ່ສາຍ | ອີເມວ |
|---|---|---|---|
| Brenda Escobedo | ຜູ້ປະສານງານ FWC | ຕໍ່ສາຍ 5396 | brendaescobedo@u-46.org |
| Laura Godínez | ຜູ້ທົດສອບ FWC | ຕໍ່ສາຍ 6078 | lauragodinez@u-46.org |
| Norma Burns | ຜູ້ໃຫ້ການສຶກສາແກ່ພໍ່ແມ່ຂອງ ELL | ຕໍ່ສາຍ 6024 | normaburns@u-46.org |
| Sonia Ríos | ຜູ້ຊ່ຽວຊານດ້ານການທົດສອບ FWC | ຕໍ່ສາຍ 6038 | soniarios@u-46.org |



*ບາງຂໍ້ມູນ ທີ່ລວມຢູ່ໃນປື້ມຄູ່ມືທີ່ອນີ້ ອາດຈະໃຊ້ບໍ່ໄດ້ໃນຊ່ວງການຮຽນທາງໄກ. ກະລຸນາເຂົ້າເບິ່ງເວັບໄຊ U-46 Covid-19* **https://www.u-46.org/Page/15532** *ຫລື ຕິດຕໍ່ຫາອາຈານໃຫຍ່ໂຮງຮຽນຂອງທ່ານ ສໍາລັບຂໍ້ມູນໃໝ່ໆ.*

# ສາລະບານ

ເຂດການສຶກສາ U-46 ໃນເຂດພື້ນທີ່ Elgin ..... 7
ສັງລວມໂດຍຫຍໍ້ ..... 7
ແຜນຍຸດທະສາດ ..... 7
ວິໄສທັດ ..... 8
ພາລະກິດ ..... 8
ຄ່ານິຍົມ ..... 8
ເປົ້າໝາຍ ..... 8
ຫຼັກສູດການສອນ ແລະ ການບໍລິການ ELL ..... 9
ສູນຕ້ອນຮັບຄອບຄົວ ..... 9
ຂ້ອຍຈະຮູ້ໄດ້ແນວໃດວ່າລູກຂອງຂ້ອຍມີຄຸນສົມບັດໄດ້ຮັບການບໍລິການຕ່າງໆ? ..... 10
ສັງລວມກ່ຽວກັບຫຼັກສູດ ELL ຂອງເຂດການສຶກສາ U-46 ..... 11
ຫຼັກສູດການສຶກສາສອງພາສາເພື່ອການປ່ຽນຜ່ານ (TBE) ..... 12
ຫຼັກສູດສອງພາສາ ..... 12
ຮູບແບບຫຼັກສູດສອງພາສາ 80:20 ..... 12
ເປົ້າໝາຍຫຼັກສູດສອງພາສາ ..... 12
ຮູບແບບຫຼັກສູດສອງພາສາແບບທາງດຽວ ..... 13
ຮູບແບບຫຼັກສູດສອງພາສາແບບສອງທາງ ..... 13
ຈຳນວນເວລາຂອງມື້ໃນຫຼັກສູດສອງພາສາແບບທາງດຽວ/ສອງທາງ 80:20 ສຳລັບແຕ່ລະພາສາ ..... 14
ການຊ່ວຍເຫຼືອຈາກພໍ່ແມ່ ..... 15
ຂໍ້ຕົກລົງຂອງພໍ່ແມ່ ..... 16
ໂຮງຮຽນປະຖົມ ELL ..... 17
ການສຶກສາສອງພາສາເພື່ອການປ່ຽນຜ່ານ (TBE)/ການຮ່ວມມື ..... 18
ຫຼັກສູດການສອນເພື່ອການປ່ຽນຜ່ານ (TPI/ESL) ..... 18
ຫຼັກສູດ ELL ຢູ່ລະດັບມັດທະຍົມ ..... 19


*ບາງຂໍ້ມູນ ທີ່ລວມຢູ່ໃນປຶ້ມຄູ່ມືຫົວນີ້ ອາດຈະໃຊ້ບໍ່ໄດ້ໃນຊ່ວງການຮຽນທາງໄກ. ກະລຸນາເຂົ້າເບິ່ງເວັບໄຊ U-46 Covid-19* ***https://www.u-46.org/Page/15532*** *ຫລື ຕິດຕໍ່ຫາອາຈານໃຫຍ່ໂຮງຮຽນຂອງທ່ານ ສຳລັບຂໍ້ມູນໃໝ່ໆ.*

ຫຼັກສູດສອງພາສາ: ຊັ້ນຮຽນທີ 7 - 11 ..... 19
ການຮຽນຮູ້ໜັງສື ESL ແບບເປັນກຸ່ມ: ຊັ້ນຮຽນທີ 12 ..... 19
ວິຊາຮຽນສໍາລັບນັກຮຽນ EL ໃນຊັ້ນຮຽນທີ 12 ..... 19
ໂຮງຮຽນມັດທະຍົມຕອນຕົ້ນ ELL (ຫຼັກສູດ TBE/TPI) ..... 20
ໂຮງຮຽນມັດທະຍົມຕອນຕົ້ນ Abbott ..... 20
ໂຮງຮຽນມັດທະຍົມຕອນຕົ້ນ Ellis ..... 20
ໂຮງຮຽນມັດທະຍົມຕອນຕົ້ນ Kimball ..... 21
ໂຮງຮຽນມັດທະຍົມຕອນຕົ້ນ Larsen ..... 21
ໂຮງຮຽນມັດທະຍົມຕອນຕົ້ນ Tefft ..... 22
ໂຮງຮຽນມັດທະຍົມຕອນປາຍ ELL (ຫຼັກສູດTBE/TPI) ..... 22
ໂຮງຮຽນມັດທະຍົມຕອນປາຍ Bartlett ..... 22
ໂຮງຮຽນມັດທະຍົມຕອນປາຍ Elgin ..... 23
ໂຮງຮຽນມັດທະຍົມຕອນປາຍ Larkin ..... 23
ໂຮງຮຽນມັດທະຍົມຕອນປາຍ South Elgin ..... 24
ໂຮງຮຽນມັດທະຍົມຕອນປາຍ Streamwood ..... 24
ຂ້ອຍສາມາດເບິ່ງຂໍ້ມູນເພີ່ມເຕີມກ່ຽວກັບຫຼັກສູດຜູ້ຮຽນພາສາອັງກິດໄດ້ຢູ່ໃສ ..... 25
MTSS – ລະບົບການສະໜັບສະໜູນແບບຫຼາຍຊັ້ນ ..... 26
U-46 ການບໍລິການນັກຮຽນແບບພິເສດ ..... 27
ຫຼັກສູດການສຶກສາໄວເດັກຕອນຕົ້ນໃນເຂດການສຶກສາ U-46 ..... 32
ການສ້າງຫຼັກສູດພິເສດຂອງ U-46 ..... 34
ຫຼັກສູດ IGNITE ແບບສອງພາສາ (Inquiry and Gifted Network for Ingenuity Talent and Exploration) ຫ້ອງຮຽນພິເສດສໍາລັບການຮຽນຕົ້ນຕໍ 4-6 ..... 34
ຫຼັກສູດພິເສດແບບສອງພາສາໃນລະດັບຊັ້ນມັດທະຍົມ ..... 34
ການຈົດທະບຽນເຂົ້າໂຮງຮຽນ ..... 35
ຂ້ອຍສາມາດຈົດທະບຽນລູກຂອງຂ້ອຍເຂົ້າຮຽນໄດ້ແນວໃດ? ຂ້ອຍຈໍາເປັນຕ້ອງມີເອກະສານໃດແດ່ສໍາລັບນັກຮຽນໃໝ່? ..... 37
ລູກຂອງຂ້ອຍຕ້ອງມີແບບຟອມທາງການແພດ ແລະ ການກວດສຸຂະພາບໃດແດ່ກ່ອນທີ່ຈະເລີ່ມເຂົ້າຮຽນໄດ້? ..... 37



*ບາງຂໍ້ມູນ ທີ່ລວມຢູ່ໃນປຶ້ມຄູ່ມືທີ່ອນີ້ ອາດຈະໃຊ້ບໍ່ໄດ້ໃນຊ່ວງການຮຽນທາງໄກ. ກະລຸນາເຂົ້າເບິ່ງເວັບໄຊ U-46 Covid-19* ***https://www.u-46.org/Page/15532*** *ຫລື ຕິດຕໍ່ຫາອາຈານໃຫຍ່ໂຮງຮຽນຂອງທ່ານ ສໍາລັບຂໍ້ມູນໃໝ່ໆ.*

ພວກເຮົາສາມາດໄປຮັບການກວດສຸຂະພາບໄດ້ຢູ່ໃສ? ........ 38
ລະບຽບການຂອງໂຮງຮຽນ ........ 38
ບົດບາດຂອງພໍ່ແມ່ໃນການສຶກສາ ແລະ ການຮຽນຂອງລູກເຂົາເຈົ້າ ........ 42
ຂ້ອຍສາມາດຮຽນຮູ້ກ່ຽວກັບໂຮງຮຽນຂອງລູກຂ້ອຍໄດ້ແນວໃດ? ........ 42
ຍັງຄົງເຊື່ອມຕໍ່ກັບ U-46 ........ 43
ມີສອງສາມວິທີໃນການເຂົ້າຮ່ວມ ........ 44
ຂ້ອຍຈະຮູ້ໄດ້ແນວໃດວ່າລູກຂອງຂ້ອຍປະສົບຜົນສໍາເລັດຢູ່ໂຮງຮຽນ? ........ 44
ຮູບຖ່າຍຕົວຢ່າງຂອງເຂດການສຶກສາ U-46 – ບັດລາຍງານໃນລະດັບຊັ້ນປະຖົມ ........ 46
ລາຍງານຄວາມກ້າວໜ້າ ESL ໃນອະນຸບານ -12 ດ້ວຍຕົວຊີ້ບອກຜົນການຮຽນພາສາ WIDA ........ 47
ບັດລາຍງານຊັ້ນມັດທະຍົມ ........ 47
ຂ້ອຍສາມາດເຮັດຫຍັງໄດ້ແດ່ຢູ່ເຮືອນເພື່ອຊ່ວຍການຮຽນຂອງລູກຂ້ອຍ? ........ 48
ຫ້ອງສະໝຸດ ........ 51
ການສະໜັບສະໜຸນຂອງຊຸມຊົນ ແລະ ການມີສ່ວນຮ່ວມຂອງພໍ່ແມ ........ 54
ພາກຄັດຕິດ ........ 56
ເຫດຜົນຂອງເຂດການສຶກສາ U-46 ສໍາລັບການລະບຸນັກຮຽນພາກປົກກະຕິ ແລະ ພາກພິເສດ ........ 56
ແບບຟອມ - ຕົວຢ່າງສໍາລັບຜູ້ຮຽນພາສາອັງກິດ (ELL) ........ 56
ການສໍາຫຼວດພາສາທີ່ໃຊ້ຢູ່ເຮືອນ ........ 57
ຈົດໝາຍແຈ້ງບອກການຈົດທະບຽນ (NOE) ສໍາລັບເດັກ 1-3 ປີ ........ 58
ຈົດໝາຍແຈ້ງບອກການຈົດທະບຽນ (NOE) ສໍາລັບເດັກ 3 ປີຂຶ້ນໄປ ........ 59
ລາຍລະອຽດຫຼັກສູດ - TBE ........ 60
ລາຍລະອຽດຫຼັກສູດ - ສອງພາສາ ........ 61
ລາຍລະອຽດຫຼັກສູດ - TPI ........ 62
ໜັງສືແຈ້ງການຄວາມຄ່ອງແຄ້ວດ້ານພາສາອັງກິດ ........ 63
ໜັງສືແຈ້ງການອອກຈາກຫຼັກສູດ ELL ........ 64
ຈົດໝາຍແຈ້ງສະຖານະການຈັດປະເພດຄືນໃໝ່ຂອງຫຼັກສູດ ELL ........ 65



*ບາງຂໍ້ມູນ ທີ່ລວມຢູ່ໃນປຶ້ມຄູ່ມືຫົວນີ້ ອາດຈະໃຊ້ບໍ່ໄດ້ໃນຊ່ວງການຮຽນທາງໄກ. ກະລຸນາເຂົ້າເບິ່ງເວັບໄຊ U-46 Covid-19* ***https://www.u-46.org/Page/15532*** *ຫລື ຕິດຕໍ່ຫາອາຈານໃຫຍ່ໂຮງຮຽນຂອງທ່ານ ສໍາລັບຂໍ້ມູນໃໝ່ໆ.*

# ເຂດການສຶກສາ U-46 ໃນເຂດພື້ນທີ່ ELGIN

## ສັງລວມໂດຍຫຍໍ້

ໂດຍມີເນື້ອທີ່ກວມເອົາ 90 ຕາລາງໄມລ໌, ເຂດການສຶກສາ U-46 ຮັບໃຊ້ 11 ຊຸມຊົນໃນເຂດຊານເມືອງເໜືອສຸດຂອງ Chicago ໃນເຂດປົກຄອງ Cook, DuPage ແລະ Kane .  ເຂດການສຶກສາຕັ້ງຢູ່ຫ່າງຈາກສູນກາງເມືອງ Chicago ໄປທາງທິດຕາເວັນຕົກປະມານ 45 ນາທີ ແລະ ຊຸມຊົນສ່ວນໃຫຍ່ຂອງພວກເຮົາແມ່ນສາມາດເຂົ້າເຖິງໄດ້ງ່າຍຈາກເສັ້ນທາງລະຫວ່າງລັດທີ່ສໍາຄັນ ແລະ ທາງລົດໄຟໂດຍສານ.

ເຂດການສຶກສາ U-46 ຮັບໃຊ້ເດັກນ້ອຍຫຼາຍກວ່າ 38,000 ຄົນແຕ່ຊັ້ນກຽມອະນຸບານໄປຈົນຮອດຊັ້ນຮຽນທີ 12.  ເຂດການສຶກສານີ້ເປັນເຂດການສຶກສາໃຫຍ່ອັນດັບສອງໃນລັດ Illinois ທີ່ປະກອບມີໂຮງຮຽນປະຖົມ 40 ແຫ່ງ, ໂຮງຮຽນມັດທະຍົມຕອນຕົ້ນ 8 ແຫ່ງ ແລະ ໂຮງຮຽນມັດທະຍົມຕອນປາຍ 5 ແຫ່ງ.

ເຂດການສຶກສາມີສໍານັກງານໃຫຍ່ຕັ້ງຢູ່ສູນການບໍລິການການສຶກສາ U-46 ຢູ່ 355 E. Chicago Street ໃນ Elgin, IL 60120.  ເບີໂທລະສັບແມ່ນ (847) 888-5000.

## ແຜນຍຸດທະສາດ

ແຜນຍຸດທະສາດຂອງ U-46 ເຊິ່ງລວມມີສີ່ຄວາມທະເຍີທະຍານ, ແປດບູລິມະສິດ ແລະ ທິດສະດີການດໍາເນີນງານ ໄດ້ຖືກຮັບຮອງເອົາໃນວັນທີ 20 ເມສາ 2015 ໂດຍຄະນະກໍາມະການການສຶກສາ.  ສີ່ຄວາມທະເຍີທະຍານແມ່ນສຸມໃສ່ເລື່ອງຄວາມສໍາເລັດຂອງນັກຮຽນ, ພະນັກງານທີ່ມີປະສິດທິຜົນ ແລະ ມີສ່ວນຮ່ວມ, ການມີສ່ວນຮ່ວມຂອງຊຸມຊົນ, ແລະ ປະສິດທິພາບ, ຄວາມເປັນເລີດ ແລະ ຄວາມຮັບຜິດຊອບ.  ທິດສະດີການດໍາເນີນງານຂອງ U-46 ເນັ້ນໜັກໃສ່ຄວາມສະເໝີພາບໃນການແຈກຢາຍແຫຼ່ງຄວາມຊ່ວຍເຫຼືອ ແລະ ວັດທະນະທໍາແຫ່ງການສ້າງສັນສິ່ງໃໝ່ ເພື່ອກະກຽມນັກຮຽນສຸກຄົນໃຫ້ປະສົບຜົນສໍາເລັດ.

ແຜນຍຸດທະສາດໄລຍະຍາວຈະຊີ້ນໍາທິດທາງວິຊາການ ແລະ ການດໍາເນີນງານຂອງ U-46 ສໍາລັບຫ້າປີຂ້າງໜ້າ. ຄະນະກໍາມະການຊີ້ນໍາແຜນຍຸດທະສາດກໍາລັງເຮັດວຽກກ່ຽວກັບການສ້າງເປົ້າໝາຍທີ່ວັດແທກໄດ້ທີ່ເໝາະສົມກັບບູລິມະສິດທີ່ໄດ້ຮັບອະນຸມັດຂອງເຂດການສຶກສາ.  ຄລິກ ບ່ອນນີ້ ສໍາລັບຂໍ້ມູນເພີ່ມຕື່ມກ່ຽວກັບແຜນຍຸດທະສາດ.

ສໍາລັບຂໍ້ມູນເພີ່ມຕື່ມກ່ຽວກັບ U-46, ກະລຸນາເຂົ້າເບິ່ງ "ກ່ຽວກັບພວກເຮົາ" ຫຼື ຄລິກ ທີ່ນີ້.


*ບາງຂໍ້ມູນ ທີ່ລວມຢູ່ໃນປຶ້ມຄູ່ມືຫົວນີ້ ອາດຈະໃຊ້ບໍ່ໄດ້ໃນຊ່ວງການຮຽນທາງໄກ. ກະລຸນາເຂົ້າເບິ່ງເວັບໄຊ U-46 Covid-19* ***https://www.u-46.org/Page/15532*** *ຫລື ຕິດຕໍ່ຫາອາຈານໃຫຍ່ໂຮງຮຽນຂອງທ່ານ ສໍາລັບຂໍ້ມູນໃໝ່ໆ.*

## ວິໄສທັດ

**“U-46 ຈະກະຕຸ້ນໃຫ້ຜູ້ຄົນປ່ຽນຄວາມຝັນຂອງເຂົາເຈົ້າໃຫ້ກາຍເປັນຄວາມຈິງ”.**

## ພາລະກິດ

**“U-46 ຈະເປັນບ່ອນທີ່ດີເລີດສຳລັບນັກຮຽນທຸກຄົນໃນການຮຽນ, ຄູສອນທຸກຄົນໃນການສອນ ແລະ ພະນັກງານທຸກຄົນໃນການເຮັດວຽກ. ທັງໝົດໝາຍເຖິງທຸກຄົນ.”**

## ຄ່ານິຍົມ

- ຄວາມສະ
- ການ
- ຄວາມຄາດຫວັງສູງ
- ການສ້າງສັນ
- ການພັດທະນາທາງວິຊາຊີບ
- ສະພາບແວດລ້ອມທີ່ປອດໄພ ແລະ
- ການມີສ່ວນຮ່ວມຂອງ
- ການເປັນຜູ້ນຳ ແລະ ຄວາມ

## ເປົ້າໝາຍ

- ເພື່ອຮັບປະກັນວ່ານັກຮຽນທຸກຄົນມີການເຂົ້າເຖິງໂອກາດດ້ານການສອນ ແລະ ການຮຽນທີ່ມີປະສິດທິພາບສູງ.
- ເພື່ອປັບປຸງຜົນການຮຽນຂອງນັກຮຽນ ແລະ ຜົນການເຮັດວຽກຂອງພະນັກງານ ແລະ ກຳຈັດຊ່ອງວ່າງດ້ານຜົນສຳເລັດ.
- ເພື່ອສະໜອງຊັບພະຍາກອນທີ່ສະໜັບສະໜູນຜົນສຳເລັດດ້ານການຮຽນສຳລັບທຸກຄົນ.
- ເພື່ອເພີ່ມການສື່ສານ ແລະ ການສະໜັບສະໜູນຜ່ານການມີສ່ວນຮ່ວມຂອງຄອບຄົວ ແລະ ຊຸມຊົນ.
- ເພື່ອບັນຈຸພະນັກງານທີ່ມີປະສິດທິພາບໃນທຸກໆຕຳແໜ່ງ ຢູ່ພາຍໃນ ແລະ ພາຍນອກຫ້ອງຮຽນ.



*ບາງຂໍ້ມູນ ທີ່ລວມຢູ່ໃນປຶ້ມຄູ່ມືຫົວນີ້ ອາດຈະໃຊ້ບໍ່ໄດ້ໃນຊ່ວງການຮຽນທາງໄກ. ກະລຸນາເຂົ້າເບິ່ງເວັບໄຊ U-46 Covid-19* ***https://www.u-46.org/Page/15532*** *ຫລື ຕິດຕໍ່ຫາອາຈານໃຫຍ່ໂຮງຮຽນຂອງທ່ານ ສຳລັບຂໍ້ມູນໃໝ່ໆ.*

# ຫຼັກສູດການສອນ ແລະ ການບໍລິການ ELL

## ສູນຕ້ອນຮັບຄອບຄົວ

ຖ້າມີການເວົ້າພາສາອື່ນທີ່ບໍ່ແມ່ນພາສາອັງກິດຢູ່ເຮືອນຂອງພວກເຮົາ, ການບໍລິການໃດແດ່ທີ່ມີໃຫ້? ສູນຕ້ອນຮັບຄອບຄົວໃຫ້ການບໍລິການຕໍ່ໄປນີ້:



- **ການລະບຸຕົວຕົນ ແລະ ການປະເມີນຜົນ:** ກວດຄັດຄວາມຄ່ອງແຄ້ວດ້ານພາສາອັງກິດຂອງນັກຮຽນແຕ່ລະຄົນທີ່ຖືກລະບຸຜ່ານ ***ການສໍາຫຼວດພາສາທີ່ໃຊ້ຢູ່ເຮືອນ*** ວ່າມີພື້ນຖານທີ່ບໍ່ແມ່ນພາສາອັງກິດ ອີງຕາມຄໍາຕອບ **"ແມ່ນ"** ຕໍ່ກັບຄໍາຖາມໃນການສໍາຫຼວດພາສາທີ່ໃຊ້ຢູ່ເຮືອນ.

- **ການບັນຈຸຜູ້ຮຽນພາສາອັງກິດ (ELs):** ກໍານົດການມີສິດໄດ້ຮັບການບໍລິການຜູ້ຮຽນພາສາອັງກິດ (ELL) ຂອງນັກຮຽນ ອີງໃສ່ຄະແນນການກວດຄັດທີ່ກໍານົດໄວ້. ຖ້ານັກຮຽນມີສິດໄດ້ຮັບການບໍລິການ ELL, ສູນຕ້ອນຮັບຄອບຄົວຈະເຮັດການສະເໜີແນະການບັນຈຸເຂົ້າຮຽນທີ່ເໝາະສົມ.

- **ຂໍ້ມູນ:** ແຈ້ງບອກຄອບຄົວໃໝ່ໃນເຂດການສຶກສາກ່ຽວກັບຫຼັກສູດການສອນທີ່ມີໃຫ້ແກ່ລູກຂອງເຂົາເຈົ້າ. ໃຫ້ຂໍ້ມູນກ່ຽວກັບຂະບວນການຈົດທະບຽນ. ຊ່ວຍເຫຼືອຄອບຄົວໃໝ່ໃນເຂດການສຶກສາໃນເລື່ອງຂໍ້ມູນກ່ຽວກັບແຫຼ່ງຄວາມຊ່ວຍເຫຼືອທີ່ມີໃຫ້ໃນເຂດການສຶກສາ U-46 ແລະຊຸມຊົນອ້ອມຂ້າງ.

**ສູນຕ້ອນຮັບຄອບຄົວ**
355 E. Chicago St.
**Second floor, Room 231**
**Elgin, IL 60120**
**ໂທລະສັບ: (847) 888-5000 ຕໍ່ສາຍ 6038**



*ບາງຂໍ້ມູນ ທີ່ລວມຢູ່ໃນປື້ມຄູ່ມືຫົວນີ້ ອາດຈະໃຊ້ບໍ່ໄດ້ໃນຊ່ວງການຮຽນທາງໄກ. ກະລຸນາເຂົ້າເບິ່ງເວັບໄຊ U-46 Covid-19* **https://www.u-46.org/Page/15532** *ຫລື ຕິດຕໍ່ຫາອາຈານໃຫຍ່ໂຮງຮຽນຂອງທ່ານ ສໍາລັບຂໍ້ມູນໃໝ່ໆ.*

# ຂ້ອຍຈະຮູ້ໄດ້ແນວໃດວ່າລູກຂອງຂ້ອຍມີຄຸນສົມບັດໄດ້ຮັບການບໍລິການຕ່າງໆ?




ໃນເວລາຈົດທະບຽນ, ຄອບຄົວປະກອບ *ແບບຟອມຂໍ້ມູນນັກຮຽນ* ແລະ *ແບບສຳຫຼວດພາສາທີ່ໃຊ້ຢູ່ເຮືອນ.* ຖ້າພໍ່ແມ່ ຫຼື ຜູ້ປົກຄອງຕາມກົດໝາຍຕອບວ່າ **"ແມ່ນ"** ຕໍ່ກັບໜຶ່ງໃນສອງຄຳຖາມໃນ *ແບບສຳຫຼວດພາສາທີ່ໃຊ້ຢູ່ເຮືອນ,* ນັກຮຽນຈະໄດ້ຮັບເຄື່ອງມືການກວດຄັດ ISBE ທີ່ກຳນົດໄວ້. ຈຸດປະສົງຂອງເຄື່ອງມືການກວດຄັດແມ່ນເພື່ອຕັດສິນກຳນົດການມີສິດໄດ້ຮັບການບໍລິການ ELL ຂອງນັກຮຽນ ແລະ ຖ້າມີສິດໄດ້ຮັບ, ກໍຈະມີການກຳນົດການບັນຈຸເຂົ້າຫຼັກສູດທີ່ເໝາະສົມສຳລັບນັກຮຽນນັ້ນ.

ເຂດການສຶກສາ U-46 ໃຊ້ເຄື່ອງມືການກວດຄັດທີ່ກຳນົດໄວ້ຂອງຄະນະກຳມະການການສຶກສາລັດ Illinois **Pre-IPT Oral®, WIDA-MODEL™, WIDA Screener™**ເຊັ່ນດຽວກັບຄະແນນ **ACCESS** ເປັນພື້ນຖານ ສຳລັບການກຳນົດການມີສິດໄດ້ຮັບ ELL ຂອງນັກຮຽນ. **WIDA MODEL™, WIDA Screener™,** ແລະ **ACCESS** ຖືກໃຫ້ຄະແນນໃນລຳດັບແຕ່ 1.0 ຫາ 6.0.

ມີຜົນນຳໃຊ້ໃນເດືອນກໍລະກົດ **2017:**

**-WIDA MODEL™** - ເດັກນ້ອຍທີ່ເຂົ້າຮຽນຊັ້ນອະນຸບານໃນພາກຮຽນທຳອິດທີ່ໄດ້ຄະແນນອີງປະກອບລວມພາກການປາກເວົ້າ (ການຟັງ/ການເວົ້າ) ຕ່ຳກວ່າ 5.0 ແມ່ນຖືວ່າເປັນຜູ້ຮຽນພາສາອັງກິດ (ELs) ແລະ ມີສິດໄດ້ຮັບການບໍລິການ TBE/TPI.

**- WIDA MODEL™ -** ເດັກນ້ອຍທີ່ເຂົ້າຮຽນຊັ້ນອະນຸບານໃນພາກຮຽນທີສອງ ຈົນຮອດພາກຮຽນທຳອິດຂອງຊັ້ນຮຽນປີທີ 1 ທີ່ໄດ້ຄະແນນ:

- ຄະແນນລວມ (ການຟັງ/ການເວົ້າ/ການອ່ານ/ການຂຽນ) **ຕ່ຳກວ່າ 5.0 ຫຼື**
- ຄະແນນການຮູ້ໜັງສື **ຕ່ຳກວ່າ 4.2** ແມ່ນຖືວ່າເປັນ ELs ແລະ ມີສິດໄດ້ຮັບການບໍລິການ TBE/TPI.

**- WIDA Screener™ -** ເດັກນ້ອຍທີ່ເຂົ້າຮຽນຊັ້ນຮຽນປີທີ 1 ໃນພາກຮຽນທີສອງຈົນຮອດຊັ້ນຮຽນ 12 ທີ່ໄດ້ຄະແນນ:

- ຄະແນນລວມ (ການຟັງ/ການເວົ້າ/ການອ່ານ/ການຂຽນ) **ຕ່ຳກວ່າ 5.0** ແມ່ນຖືວ່າເປັນ ELs ແລະ ມີສິດໄດ້ຮັບການບໍລິການ TBE/TPI.

**- ACCESS** - ເດັກນ້ອຍທີ່ເຮັດການປະເມີນ ACCESS ແລະ ໄດ້ຄະແນນ:

- ຄະແນນລວມ (ການຟັງ/ການເວົ້າ/ການອ່ານ/ການຂຽນ) **ຕ່ຳກວ່າ 4.8** ແມ່ນຖືວ່າເປັນ ELs ແລະ ມີສິດໄດ້ຮັບການບໍລິການ TBE/TPI.

ການສະເໜີແນະກ່ຽວກັບການບັນຈຸເຂົ້າຫຼັກສູດ ແລະ ການບໍລິການທີ່ເໝາະສົມ ຖືກເຮັດອີງໃສ່ຜົນການກວດຄັດເຫຼົ່ານີ້. ມີການໃຫ້ *ໜັງສືແຈ້ງບອກການລົງທະບຽນ ທີ່*ອະທິບາຍການສະເໜີແນະ ແລະ ການບໍລິການຕ່າງໆ ພ້ອມກັບລາຍລະອຽດຫຼັກສູດ. ພໍ່ແມ່ມີສິດຍອມຮັບເອົາ ຫຼື ປະຕິເສດການສະເໜີແນະການບັນຈຸເຂົ້າຮຽນ ELL.


*ບາງຂໍ້ມູນ ທີ່ລວມຢູ່ໃນປຶ້ມຄູ່ມືຫົວນີ້ ອາດຈະໃຊ້ບໍ່ໄດ້ໃນຊ່ວງການຮຽນທາງໄກ. ກະລຸນາເຂົ້າເບິ່ງເວັບໄຊ U-46 Covid-19* ***https://www.u-46.org/Page/15532*** *ຫລື ຕິດຕໍ່ຫາອາຈານໃຫຍ່ໂຮງຮຽນຂອງທ່ານ ສຳລັບຂໍ້ມູນໃໝ່ໆ.*

# ສັງລວມກ່ຽວກັບຫຼັກສູດ ELL ຂອງເຂດການສຶກສາ U-46



| ເຂດການສຶກສາ U-46<br>ສັງລວມກ່ຽວກັບຫຼັກສູດຜູ້ຮຽນພາສາອັງກິດ | | | |
|---|---|---|---|
| **ລະດັບໂຮງຮຽນ** | **ການສຶກສາສອງພາສາເພື່ອການປ່ຽນຜ່ານ (TBE)** | **ຫຼັກສູດການສອນໄລຍະປ່ຽນຜ່ານ (TPI)**<br>ພາສາອັງກິດເປັນພາສາທີສອງ | **ສອງພາສາ (2020-2021)** |
| ໂຮງຮຽນປະຖົມ<br> | ບໍານຽມ - ຊັ້ນຮຽນທີ 6 (ໂຮງຮຽນປະຖົມອິດສະຫຼະ) | ບໍານຽມ - ຊັ້ນຮຽນທີ 6 ຊັ້ນຮຽນ (ໂຮງຮຽນປະຖົມອິດສະຫຼະ) | ບໍານຽມ - ຊັ້ນຮຽນທີ 6<br>80:20<br>ສອງພາສາແບບທາງດຽວ<br><br>ອະນຸບານ – ຊັ້ນຮຽນທີ 6<br>80:20<br>ສອງພາສາແບບສອງທາງ |
| ໂຮງຮຽນມັດທະຍົມຕອນຕົ້ນ<br> | | ຊັ້ນຮຽນທີ 7 ແລະ 8 | **ຊັ້ນຮຽນທີ 7 ແລະ 8**<br>ໂຮງຮຽນມັດທະຍົມຕອນຕົ້ນມ Abbott, Ellis, Kimball, Larsen, ແລະ Tefft |
| ໂຮງຮຽນມັດທະຍົມຕອນປາຍ<br> | **ຊັ້ນຮຽນທີ 12**<br>ໂຮງຮຽນມັດທະຍົມຕອນປາຍ Elgin, Larkin, ແລະ Streamwood | **ຊັ້ນຮຽນທີ 9 - 11**<br>ໂຮງຮຽນມັດທະຍົມຕອນປາຍ Bartlett, South Elgin<br>**ຊັ້ນຮຽນທີ 12**<br>ໂຮງຮຽນມັດທະຍົມຕອນປາຍ Elgin, Larkin, ແລະ Streamwood | **ຊັ້ນຮຽນທີ 9 - 11**<br>ໂຮງຮຽນມັດທະຍົມຕອນປາຍ Bartlett, Elgin, Larkin, Streamwood, ແລະ South Elgin |

ສໍາລັບລາຍຊື່ສະຖານທີ່ໂຮງຮຽນ ELL ແລະ ຂໍ້ມູນຫຼ້າສຸດ ໃຫ້ເຂົ້າເບິ່ງ www.u-46.org ຢູ່ພາຍໃຕ້ຫົວຂໍ້ ພະແນກ >> ຜູ້ຮຽນພາສາອັງກິດ. ສໍາລັບຂໍ້ມູນກ່ຽວກັບການກໍານົດຫລັກສູດນັກຮຽນສະເພາະ ແມ່ນໄປໜ້າທີ 27 ໃນປື້ມຄູ່ມືຫົວນີ້.

# ຫຼັກສູດການສຶກສາສອງພາສາເພື່ອການປ່ຽນຜ່ານ (TBE)

ຫຼັກສູດການສຶກສາສອງພາສາເພື່ອການປ່ຽນຜ່ານ (TBE) ແມ່ນຫຼັກສູດເຕັມເວລາທີ່ກຳນົດໃຫ້ນັກຮຽນທີ່ມີພາສາດຽວກັນໃນສັດສ່ວນທີ່ສູງທີ່ມີສິດໄດ້ຮັບ. ມັນຖືກສະໜອງໃຫ້ຢູ່ໂຮງຮຽນບ່ອນທີ່ມີນັກຮຽນທີ່ມີສິດໄດ້ຮັບແຕ່ 20 ຄົນຂຶ້ນໄປທີ່ມີພາສາດຽວກັນ ຕາມທີ່ກົດໝາຍກຳນົດໄວ້. ຫຼັກສູດດັ່ງກ່າວຊ່ວຍໃຫ້ນັກຮຽນປະສົບຜົນສຳເລັດໃນວິຊາຮຽນຕ່າງໆ ແລະ ຮຽນພາສາອັງກິດໃນການສອນເປັນພາສາກຳເນີດ ແລະ ESL.

# ຫຼັກສູດສອງພາສາ

## ຮູບແບບຫຼັກສູດສອງພາສາ 80:20

ການສຶກສາສອງພາສາແມ່ນການໃຊ້ສອງພາສາເຂົ້າໃນການສິດສອນ. ນັກຮຽນໄດ້ຮັບການສອນໃຫ້ອ່ານ ແລະ ຂຽນເປັນສອງພາສາໃນທຸກວິຊາຮຽນ. ຢູ່ໃນ U-46, ພາສາການສອນແມ່ນພາສາອັງກິດ ແລະ ພາສາສະເປນ. ຮູບແບບຫຼັກສູດສອງພາສາ 80:20 ແມ່ນຮູບແບບການສຶກສາສອງພາສາເພື່ອການປ່ຽນຜ່ານສຳລັບນັກຮຽນໃນຊັ້ນຮຽນຕ່າງໆແຕ່ຊັ້ນກຽມອະນຸບານໄປຈົນຮອດຊັ້ນຮຽນທີ 11 ຜູ້ທີ່ມີຄຸນສົມບັດກົງກັບເກນເງື່ອນໄຂຕໍ່ໄປນີ້:

- ນັກຮຽນຊາວສະເປນທີ່ບໍ່ມີພື້ນຖານພາສາອັງກິດ ຜູ້ທີ່ມີສິດໄດ້ຮັບການບໍລິການ ELL ໃນຫຼັກສູດການສຶກສາສອງພາສາເພື່ອການປ່ຽນຜ່ານ ອີງໃສ່ຄະແນນຄວາມຄ່ອງແຄ້ວດ້ານພາສາອັງກິດຂອງເຂົາເຈົ້າ
  ແລະ
- ເຈົ້າຂອງພາສາອັງກິດ ຫຼື ນັກຮຽນທີ່ເກັ່ງພາສາອັງກິດໄດ້ຮັບເຊີນເຂົ້າຮ່ວມຫຼັກສູດອີງຕາມເກນເງື່ອນໄຂການຄັດເລືອກທີ່ກຳນົດໂດຍເຂດການສຶກສາ.

## ເປົ້າໝາຍຫຼັກສູດສອງພາສາ 

ນັກຮຽນທັງໝົດຈະ...

- ຕາມລະດັບຊັ້ນຮຽນ ຫຼື ສູງກວ່າ
- ພັດທະນາລະດັບຄວາມຄ່ອງແຄ້ວທີ່ສູງໃນພາສາທຳອິດຂອງເຂົາເຈົ້າ
- ພັດທະນາລະດັບຄວາມຄ່ອງແຄ່ວທີ່ສູງໃນພາສາທີສອງໃດໜຶ່ງ
- ມີທັດສະນະ ແລະ ການປະພຶດທີ່ດີດ້ານວັດທະນະທຳຕ່າງໆ
- ຕາມເສັ້ນທາງກ້າວສູ່ການເປັນພົນລະເມືອງຂອງໂລກທີ່ໃຊ້ສອງພາສາ ແລະ ສອງການຮຽນຮູ້ໃນໄລຍະຍາວ



*ບາງຂໍ້ມູນ ທີ່ລວມຢູ່ໃນປື້ມຄູ່ມືທີ່ນີ້ ອາດຈະໃຊ້ບໍ່ໄດ້ໃນຊ່ວງການຮຽນທາງໄກ. ກະລຸນາເຂົ້າເບິ່ງເວັບໄຊ U-46 Covid-19* **https://www.u-46.org/Page/15532** *ຫຼື ຕິດຕໍ່ຫາອາຈານໃຫຍ່ໂຮງຮຽນຂອງທ່ານ ສຳລັບຂໍ້ມູນໃໝ່ໆ.*

## ຮູບແບບຫຼັກສູດສອງພາສາແບບທາງດຽວ




## ຮູບແບບຫຼັກສູດສອງພາສາແບບສອງທາງ




| **ບັນດາໂຮງຮຽນທີ່ມີຮູບແບບຫຼັກສູດສອງພາສາແບບສອງທາງໃນ U-46** |
| --- |
| **ສຳລັບຂໍ້ມູນຫຼ້າສຸດກ່ຽວກັບຫຼັກສູດສອງພາສາ, ກະລຸນາເຂົ້າເບິ່ງຫຼັກສູດ ELL ໄດ້ທີ່ [www.u-46.org](www.u-46.org) ຢູ່ພາຍໃຕ້ຫົວຂໍ້ ພະແນກ >> ຜູ້ຮຽນພາສາອັງກິດ.** |


*ບາງຂໍ້ມູນ ທີ່ລວມຢູ່ໃນປຶ້ມຄູ່ມືທີ່ດນີ້ ອາດຈະໃຊ້ບໍ່ໄດ້ໃນຊ່ວງການຮຽນທາງໄກ. ກະລຸນາເຂົ້າເບິ່ງເວັບໄຊ U-46 Covid-19* ***https://www.u-46.org/Page/15532*** *ຫລື ຕິດຕໍ່ຫາອາຈານໃຫຍ່ໂຮງຮຽນຂອງທ່ານ ສຳລັບຂໍ້ມູນໃໝ່ໆ.*




ຈຳນວນເວລາຂອງມື້ໃນຫຼັກສູດສອງພາສາແບບທາງດຽວ/ສອງທາງ 80:20 ສຳລັບແຕ່ລະພາສາ






*ບາງຂໍ້ມູນ ທີ່ລວມຢູ່ໃນປຶ້ມຄູ່ມືທີ່ນີ້ ອາດຈະໃຊ້ບໍ່ໄດ້ໃນຊ່ວງການຮຽນທາງໄກ. ກະລຸນາເຂົ້າເບິ່ງເວັບໄຊ U-46 Covid-19* ***https://www.u-46.org/Page/15532*** *ຫລື ຕິດຕໍ່ຫາອາຈານໃຫຍ່ໂຮງຮຽນຂອງທ່ານ ສຳລັບຂໍ້ມູນໃໝ່ໆ.*

## ການຊ່ວຍເຫຼືອຈາກພໍ່ແມ່

### ຄວາມສຳຄັນຂອງການສະໜັບສະໜູນຈາກພໍ່ແມ່

ພໍ່ແມ່ເຮັດວຽກກັບຄູສອນ
ແລະ ຜູ້ອຳນວຍການ
ໂຮງຮຽນເພື່ອສົ່ງເສີມການ
ພັດທະນາ ທັງສອງພາສາ
ແລະ ສອງວັດທະນະທຳ
ສຳລັບເດັກນ້ອຍທຸກຄົນທີ່
ຢູ່ໃນຫຼັກສູດ – ບໍ່ແມ່ນໃຫ້
ແຕ່ເດັກຮຽນເອງ!



### ແຫຼ່ງຄວາມຊ່ວຍເຫຼືອທີ່ໃຫ້ສຳລັບພໍ່ແມ່ຂອງນັກຮຽນສອງພາສາ

- **Center for Applied Linguistics** www.cal.org/twi
- **Center for Advanced Research on Language Acquisition** www.carla.umn.edu
- **Dual Language of New Mexico (DLeNM)** www.dlenm.org
- **ສູນສອນການຮຽນໜັງສືສອງພາສາ: ບລັອກຂໍ້ມູນສຳລັບພໍ່ແມ່ສອງພາສາ** http://www.teachingforbiliteracy.com/category/bilingual-parenting/
- ***Colorín Colorado*** http://www.colorincolorado.org/
- **Multilingual Living** http://www.multilingualliving.com/
- **ອົງການຈັດຕັ້ງອື່ນທີ່ມີຄວາມສົນໃຈພິເສດໃນການສຶກສາສອງພາສາ:**
  - **ສະມາຄົມການສຶກສາສອງພາສາແຫ່ງຊາດ (NABE)**
  - **2-Way CABE (ສະມາຄົມການສຶກສາສອງພາສາລັດຄາລິຟໍເນັຍ)**
  - **ສູນແຫຼ່ງຂໍ້ມູນລັດ Illinois.**
- **ພາກສ່ວນສອງພາສາຂອງເວັບໄຊຂອງຜູ້ຮຽນພາສາອັງກິດ** https://www.u-46.org/Domain/5425

# ຂໍ້ຕົກລົງຂອງພໍ່ແມ່



ຫຼັກສູດ ELL ຂອງເຂດການສຶກສາ U-46
ຂໍ້ຕົກລົງພໍ່ແມ່ * ຫຼັກສູດພາສາຄູ່ 80:20



ເຂດການສຶກສາ **U-46** ຮູ້ເຖິງບົດບາດຄວາມສຳຄັນທີ່ວ່າ ການມີສ່ວນຮ່ວມຂອງພໍ່ແມ່ຢ່າງເອົາໃຈໃສ່ ຈະມີບົດບາດສຳຄັນໃຫ້ແກ່ການສຶກສາຂອງລູກໆເຂົາເຈົ້າ ເພື່ອເຮັດໃຫ້ເຂົາເຈົ້າປະສົບຜົນສຳເລັດດ້ານການສຶກສາ. ພວກເຮົາພົບວ່າ ນັກຮຽນຜູ້ທີ່ໄດ້ຮັບການຊ່ວຍເຫລືອ ແລະ ແຮງກະຕຸ້ນຈາກພໍ່ແມ່ເຂົາເຈົ້າ ຈະປະສົບຜົນສຳເລັດໃນຫລັກສູດພາສາຄູ່ **80:20.** ເຂດຂອງພວກເຮົາເຊື່ອໝັ້ນໃນຄວາມພະຍາຍາມໃນການຮ່ວມມື ແລະ ອຸທິດລະຫວ່າງພໍ່ແມ່, ຄູອາຈານ ແລະ ນັກຮຽນ ໃນການພັດທະນາ ແລະ ສ້າງທັກສະທີ່ຈຳເປັນໃນແຕ່ລະລະດັບຊັ້ນຮຽນ. ທັກສະເຫລົ່ານີ້ ຈະແກ້ໄຂບັນຫາຄວາມສາມາດທາງສັງຄົມ ແລະ ຄວາມຄາດຫວັງດ້ານການສຶກສາຂັ້ນສູງ ສຳລັບສອງພາສາ ໃນຫລັກສູດຂອງພວກເຮົາ ເຊື່ອວ່າ ນັກຮຽນຈະສາມາດແຂ່ງຂັນກັບສັງຄົມສາກົນຂອງພວກເຮົາ ແລະ ກາຍມາເປັນປະຊາກອນຫລາຍພາສາ ແລະ ຫລາຍວັດທະນາທຳ. ຫລັກສູດນີ້ແມ່ນມີຄວາມມຸ່ງໝັ້ນໃນການສ້າງ, ພັດທະນາ ແລະ ຍົກຍ້ອງຄວາມແຕກຕ່າງ ທີ່ເຮັດໃຫ້ພວກເຮົາມີເອກະລັກ ແລະ ຍັງສາມາດເຕົ້າໂຮມຊຸມຊົນການຮຽນຮູ້ຫລາຍພາສາ ແລະ ຫລາຍວັດທະນາທຳ. ການເຂົ້າຮ່ວມຫລັກສູດນີ້ແມ່ນມີເປົ້າໝາຍໃນການສ້າງຄວາມພາກພູມໃຈໃນເຊື້ອຊາດ ແລະ ຄວາມພູມໃຈໃນລັກສະນະວັດທະນາທຳ ແລະ ພາສາຂອງນັກຮຽນ. ຄວາມຮູ້ສຶກທີ່ດີຕໍ່ຕົວເອງ ແລະ ຕໍ່ກັບເພື່ອນຮ່ວມຫ້ອງເຂົາເຈົ້າເຫລົ່ານີ້ຈະເຮັດໃຫ້ນັກຮຽນທຸກມື້ນີ້ ກາຍເປັນຜູ້ໃຫຍ່ທີ່ຍອມຮັບ, ໃຫ້ກຽດ ແລະ ຮັບຮູ້ເຖິງຄວາມຫລາກຫລາຍທີ່ອຸດົມສົມບູນຂອງພວກເຮົາ.

ຂໍ້ຕົກລົງຂອງພໍ່ແມ່
ເນື່ອງຈາກພໍ່ແມ່ ຫລື ຜູ້ປົກຄອງຕາມກົດໝາຍ 1 ເຂົ້າໃຈວ່າ: (ກະລຸນາກວດເບິ່ງກ່ອງຂ້າງລຸ່ມ)

- ☐ ເປົ້າໝາຍຂອງພາສາຄູ່ 80:20 ແມ່ນການພັດທະນາສອງພາສາ ແລະ ການອ່ານ ແລະ ການຂຽນເປັນພາສາອັງກິດ ແລະ ພາສາສະເປນ.
- ☐ ການຮຽນຮູ້ພາສາທີສອງສາມາດເປັນສິ່ງທ້າທາຍ ແລະ ບາງຄັ້ງນັກຮຽນອາດຈະຮູ້ສຶກ ແລະ/ຫລື ເບິ່ງຄືວ່າຈະຜິດຫວັງ ເມື່ອເຂົາເຈົ້າບໍ່ເຂົ້າໃຈທັງໝົດວ່າ ອາຈານເຂົາເຈົ້າກຳລັງເວົ້າຫຍັງ. ແນວໃດກໍ່ຕາມ, ການຄົ້ນຄວ້າສະແດງໃຫ້ເຫັນວ່າ ນັກຮຽນສາມາດຮຽນຮູ້ທັກສະການສຶກສາ ແລະ ພາສາ ທີ່ຈຳເປັນໃນແຕ່ລະຊັ້ນຮຽນໃນເວລາທີ່ເໝາະສົມ.
- ☐ ມີຫ້າຂັ້ນຂອງການຮຽນພາສາທີສອງ ແລະ ນັກຮຽນທັງໝົດຈະຕ້ອງໄດ້ຜ່ານໄລຍະງຽບ ເມື່ອຮຽນພາສາທີສອງ.
- ☐ ການຄົ້ນຄວ້າໄດ້ສະແດງໃຫ້ເຫັນວ່າ ອາດຈະໃຊ້ເວລາ 6 ຫາ 9 ປີ ສຳລັບເດັກນ້ອຍ ທີ່ຈະສາມາດໃຊ້ພາສາວິຊາການໃນພາສາທີສອງ.
- ☐ ເນື່ອງຈາກພໍ່ແມ່ 1 ຮູ້ເຖິງຄວາມສຳຄັນຂອງການມີສ່ວນຮ່ວມຢ່າງຕັ້ງໜ້າໃນດ້ານການສຶກສາຂອງລູກສາວ/ລູກຊາຍຂອງເຂົາເຈົ້າ. ເປົ້າໝາຍແມ່ນເພື່ອໃຫ້ພໍ່ແມ່ ແລະ ອາຈານໄດ້ເຮັດວຽກຮ່ວມກັນ ເພື່ອພັດທະນານັກຮຽນໃຫ້ມີຄວາມຮູ້ສອງພາສາ, ອ່ານໄດ້ສອງພາສາ ແລະ ສາມາດຮັກສາສາຍສຳພັນດ້ານວັດທະນະທຳໃນເຊື້ອຊາດ ຄືເປັນປະຊາກອນຂອງສັງຄົມສາກົນ.
- ☐ ຂ້າພະເຈົ້າເຂົ້າໃຈເຖິງຄວາມສຳຄັນໃນການກະຕຸ້ນລູກຊາຍ/ລູກສາວຂອງຂ້າພະເຈົ້າ ເພື່ອອ່ານ ຫລື ສາມາດອ່ານໄດ້ຢ່າງໝັ້ນໃຈໃນແຕ່ລະວັນ ຄືເປັນພາສາບ້ານເກີດຂອງຂ້າພະເຈົ້າ. ຍິ່ງໄປກວ່ານັ້ນ, 1 ຍັງຮູ້ວ່າ ໂດຍການໃຫ້ເຂົາເຈົ້າອ່ານ ຫລື ອ່ານສູ່ເຂົາເຈົ້າຟັງດ້ວຍພາສາທຳອິດຂອງເຂົາເຈົ້າ, ມັນຈະຊ່ວຍໃຫ້ເດັກນ້ອຍສາມາດພັດທະນາທັກສະການຮູ້ໜັງສືຂອງເຂົາເຈົ້າໄດ້.
- ☐ ຂ້າພະເຈົ້າເຂົ້າໃຈຄວາມສຳຄັນຂອງການກະຕຸ້ນລູກຊາຍ/ລູກສາວຂອງເຂົາເຈົ້າ ເພື່ອເຮັດວຽກບ້ານໃຫ້ສຳເລັດ. 1 ມຸ່ງໝັ້ນທີ່ຈະໃຫ້ສະຖານທີ່ງຽບສະຫງົບ ໃນຈຸດທີ່ນັກຮຽນສາມາດຮຽນ ແລະ ເຝິກແອບທັກສະທີ່ໄດ້ຮຽນມາຈາກໂຮງຮຽນ.
- ☐ ມັນເປັນສິ່ງສຳຄັນສຳລັບລູກຊາຍ/ລູກສາວຂອງຂ້າພະເຈົ້າ ທີ່ຈະເຂົ້າໂຮງຮຽນໃນແຕ່ລະວັນ ເພື່ອຮຽນຮູ້ເອົາທັກທາງດ້ານວິຊາການ, ສັງຄົມ ແລະ ພາສາ ທີ່ຈຳເປັນສຳລັບຊັ້ນຮຽນ. 1 ມຸ່ງໝັ້ນ ໃຫ້ລູກຊາຍ/ລູກສາວຂອງຂ້ອຍ ມີຄວາມພ້ອມໃນການຮ່ຳຮຽນຢູ່ໂຮງຮຽນ.



ໂດຍການເຊັນຂໍ້ຕົກລົງນີ້ ຄືພໍ່ແມ່, 1 ຍອມຮັບເອົາຈຸດປະສົງທາງດ້ານວິຊາການ, ສັງຄົມ-ອາລົມ ສຳລັບການພັດທະນາພາສາທີສອງ ທີ່ຢູ່ໃນແບບຫລັກສູດພາສາຄູ່ 80:20 ໃນເຂດການສຶກສາ U-46.

I________________________________ຂ້າພະເຈົ້າ ພໍ່ແມ່/ຜູ້ປົກຄອງຕາມກົດໝາຍ ______________________________ ຢັ້ງຢືນວ່າ 1 ໄດ້ອ່ານຂໍ້ຕົກລົງນີ້ ແລະ ໂດຍການເຊັນຂໍ້ຕົກລົງ, 1 ຂໍຢັ້ງຢືນການສະໜັບສະໜູນ ແລະ ຄວາມມຸ່ງໝັ້ນຂອງຂ້າພະເຈົ້າສຳລັບລູກຊາຍ/ລູກສາວຂອງຂ້າພະເຈົ້າໃຫ້ໄດ້ຮັບໂອກາດໃນການເຂົ້າຮ່ວມຫລັກສູດພາສາຄູ່ 80:20 ຢ່າງປະສົບຜົນສຳເລັດຕະຫຼອດການເຂົ້າໂຮງຮຽນຂອງເຂົາເຈົ້າ.

ເຂດການສຶກສາ U-46 ແມ່ນມີຄວາມມຸ່ງໝັ້ນ ໃນການມອບຫລັກສູດພາສາຄູ່ 80:20 ໃນຊັ້ນຮຽນກຸງມອະນຸບານ ຜ່ານຊັ້ນຮຽນທີ 12. ໂດຍການປະຕິບັດດັ່ງກ່າວ, ເຂດ U-46 ໄດ້ສຳເລັດເປົ້າໝາຍການສືບຕໍ່ພັດທະນາທັກສະດ້ານວິຊາການ ແລະ ພາສາຂອງນັກຮຽນໃນທັງສອງພາສາ. ຂໍແນະນຳເປັນຢ່າງສູງວ່າ ນັກຮຽນທີ່ຍັງຢູ່ໃນຫລັກສູດພາສາຄູ່ຕະຫລອດຮອດຊັ້ນຮຽນຕ່າງໆ ທີ່ມາຈາກເຂດ ທີ່ລວມມີໂຮງຮຽນມັດທະຍົມ ທີ່ເຂົາເຈົ້າຈະໄດ້ພັດທະນາທັກສະສອງພາສາທີ່ຈຳເປັນ ເພື່ອເອົາໃບຢັ້ງຢືນ Seal of Billiteracy ຂອງລັດອິລີນອຍ.

ລາຍເຊັນພໍ່ແມ່/ຜູ້ປົກຄອງຕາມກົດໝາຍ: ______________________________ ວັນທີ: ____________

ຊື່ຂອງນັກຮຽນ: ______________________________ ຊັ້ນຮຽນ: ____________

ນາມສະກຸນ ຊື່ຕົ້ນ

ລາຍເຊັນອາຈານໃຫຍ່: ______________________________ ວັນທີ: ____________

* ຫລັກສູດພາສາຄູ່ 80:20 ແມ່ນໄດ້ຖືກອອກແບບ ສຳລັບນັກຮຽນ ທີ່ເໝາະສົມກັບຫລັກສູດ ELL ອີງຕາມລະບຽບບໍລິຫານລັດອິລີນອຍ. ຍັງໃຊ້ເປັນຫລັກສູດເສີມສຳລັບນັກຮຽນທີ່ເກັ່ງພາສາອັງກິດ.
ແກ້ໄຂ ເດືອນມີຖຸນາ 2019


*ບາງຂໍ້ມູນ ທີ່ລວມຢູ່ໃນປຶ້ມຄູ່ມືທີ່ອນີ້ ອາດຈະໃຊ້ບໍ່ໄດ້ໃນຊ່ວງການຮຽນທາງໄກ. ກະລຸນາເຂົ້າເບິ່ງເວັບໄຊ U-46 Covid-19* ***https://www.u-46.org/Page/15532*** *ຫລື ຕິດຕໍ່ຫາອາຈານໃຫຍ່ໂຮງຮຽນຂອງທ່ານ ສຳລັບຂໍ້ມູນໃໝ່ໆ.*

# ໂຮງຮຽນປະຖົມ ELL

**ໂຮງຮຽນປະຖົມ Channing**
8:00 ໂມງເຊົ້າ – 2:00 ໂມງແລງ
63 S. Channing St.
Elgin 60120
847/888-5185

**ໂຮງຮຽນປະຖົມ Coleman**
8:30 ໂມງເຊົ້າ – 2:30 ໂມງແລງ
1220 Dundee Avenue
Elgin 60120
847/888-5190

**ໂຮງຮຽນປະຖົມ Creekside**
8:30 ໂມງເຊົ້າ – 2:30 ໂມງແລງ
655 N. Airlite Street
Elgin 60123
847/289-6270

**ໂຮງຮຽນປະຖົມ Garfield**
8:30 ໂມງເຊົ້າ – 2:30 ໂມງແລງ
420 May Street
Elgin 60120
847/888-5192

**ໂຮງຮຽນປະຖົມ Glenbrook**
8:00 ໂມງເຊົ້າ – 2:00 ໂມງແລງ
315 Garden Circle
Streamwood 60107
630/213-5555

**ໂຮງຮຽນ Hanover Countryside**
8:30 ໂມງເຊົ້າ – 2:30 ໂມງແລງ
6 Bartlett Road
Streamwood 60107
630/213-5560

**ໂຮງຮຽນປະຖົມ Harriet Gifford**
8:00 ໂມງເຊົ້າ – 2:00 ໂມງແລງ
240 S. Clifton Avenue
Elgin 60123
847/888-5195

**ໂຮງຮຽນປະຖົມ Heritage**
8:00 ໂມງເຊົ້າ – 2:00 ໂມງແລງ
507 Arnold Avenue
Streamwood 60107
630/213-5565

**ໂຮງຮຽນປະຖົມ Highland**
8:00 ໂມງເຊົ້າ – 2:00 ໂມງແລງ
190 N. Melrose Avenue
Elgin 60123
847/888-5280

**ໂຮງຮຽນປະຖົມ Hillcrest**
8:30 ໂມງເຊົ້າ – 2:30 ໂມງແລງ
80 N. Airlite Street
Elgin 60123
847/888-5282

**ໂຮງຮຽນປະຖົມ Hilltop**
**ສະຖານທີ່ກຽມອະນຸບານ DL/TPI**
8:00 ໂມງເຊົ້າ – 2:00 ໂມງແລງ
1855 Rohrssen Road
Elgin 60120
847/289-6655

**ໂຮງຮຽນປະຖົມ Horizon**
**ສະຖານທີ່ກຽມອະນຸບານ DL/TPI**
9:30 ໂມງເຊົ້າ – 3:30 ໂມງແລງ
1701 Greenbrook Blvd.
Hanover Park 60133
630/213-5570

**ໂຮງຮຽນປະຖົມ Huff**
**ສະຖານທີ່ກຽມອະນຸບານສອງພາສາ**
8:00 ໂມງເຊົ້າ – 2:00 ໂມງແລງ
801 Hastings Street
Elgin 60120
847/888-5285

**ສວນສາທາລະນະ Illinois**
**ສູນການຮຽນຮູ້ໄວເດັກ**
8:00 ໂມງເຊົ້າ – 2:00 ໂມງແລງ
1350 Wing Street
Elgin, IL 60123
847/289-6041

**ການເພິ່ງພາຕົນເອງ**
**ສູນການຮຽນຮູ້ໄວເດັກ**
8:00 ໂມງເຊົ້າ – 2:00 ໂມງແລງ
200 Taylor Ave
Bartlett, IL 60103
630/213-5629

**ໂຮງຮຽນປະຖົມ Laurel Hil**
8:00 ໂມງເຊົ້າ – 2:00 ໂມງແລງ
1750 Laurel Avenue
Hanover Park 60133
630/213-5580

**ໂຮງຮຽນປະຖົມ Liberty**
**ຫຼັກສູດ TBE/TPI**
8:00 ໂມງເຊົ້າ – 2:00 ໂມງແລງ
121 Naperville Road
Bartlett 60103
630/540-7680

**ໂຮງຮຽນປະຖົມ Lincoln**
8:30 ໂມງເຊົ້າ – 2:30 ໂມງແລງ
1650 Maureen Drive
Hoffman Estates 60192
847/289-6639

**ໂຮງຮຽນປະຖົມ Lords Park**
8:00 ໂມງເຊົ້າ – 2:00 ໂມງແລງ
323 Waverly Drive
Elgin 60120
847/888-5360

**ໂຮງຮຽນປະຖົມ Lowrie**
8:30 ໂມງເຊົ້າ – 2:30 ໂມງແລງ
264 Oak Street
Elgin 60123
847/888-5260

**ໂຮງຮຽນປະຖົມ McKinley**
8:30 ໂມງເຊົ້າ – 2:30 ໂມງແລງ
258 Lovell Street
Elgin 60120
847/888-5262

**ຫຼັກສູດ More At 4**
**ສະຖານທີ່ກຽມອະນຸບານ DL/TPI**
9:30 ໂມງເຊົ້າ – 3:30 ໂມງແລງ
799 S. McLean Blvd.
Elgin 60123
847/456-4343

**ໂຮງຮຽນປະຖົມ Nature Ridge**
8:00 ໂມງເຊົ້າ – 2:00 ໂມງແລງ
1899 Westridge Blvd
Bartlett 60103
630/372-4647

**ໂຮງຮຽນປະຖົມ Oakhill**
8:00 ໂມງເຊົ້າ – 2:00 ໂມງແລງ
502 Oltendorf Road
Streamwood 60107
630/213-5585

**ໂຮງຮຽນປະຖົມ Ontarioville**
**ສະຖານທີ່ກຽມອະນຸບານສອງພາສາ**
8:30 ໂມງເຊົ້າ – 2:30 ໂມງແລງ
2100 Elm Street
Hanover Park 60133
630/213-5590

**ໂຮງຮຽນປະຖົມ Otter Creek**
8:00 ໂມງເຊົ້າ – 2:00 ໂມງແລງ
2701 Hopps Road
Elgin 60123
847/888-6995

**ໂຮງຮຽນປະຖົມ Parkwood**
8:30 ໂມງເຊົ້າ – 2:30 ໂມງແລງ
2150 Laurel Avenue
Hanover Park 60133
630/213-5595

**ໂຮງຮຽນປະຖົມ Ridge Circle**
8:30 ໂມງເຊົ້າ – 2:30 ໂມງແລງ
420 Ridge Circle
Streamwood 60107
630/213-5600

**ໂຮງຮຽນປະຖົມ Ronald D. O'Neal**
8:30 ໂມງເຊົ້າ – 2:30 ໂມງແລງ
510 Franklin Blvd.
Elgin 60120
847/888-5266

**ໂຮງຮຽນປະຖົມ Sunnydale**
8:30 ໂມງເຊົ້າ – 2:30 ໂມງແລງ
716 Sunnydale Blvd.
Streamwood 60107
630/213-5610

**ໂຮງຮຽນປະຖົມ Sycamore Trails**
**ສະຖານທີ່ກຽມອະນຸບານ TBE/TPI**
8:00 ໂມງເຊົ້າ – 2:00 ໂມງແລງ
1025 Sycamore Ln.
Bartlett 60103
630/213-5641

**ໂຮງຮຽນປະຖົມ Timber Trails**
**ສະຖານທີ່ກຽມອະນຸບານ TBE/TPI**
8:30 ໂມງເຊົ້າ – 2:30 ໂມງແລງ
1675 McDonough Road
Hoffman Estates 60192
847/289-6640

**ໂຮງຮຽນປະຖົມ Washington**
8:30 ໂມງເຊົ້າ – 2:30 ໂມງແລງ
819 W. Chicago Street
Elgin 60123
847/888-5270

***ໂຮງຮຽນທີ່ມີລາຍຊື່ຂ້າງເທິງທັງໝົດ (ຍົກເວັ້ນໂຮງຮຽນ Liberty ແລະ Sycamore Trails) ແມ່ນມີຫຼັກສູດສອງພາສາ 80:20***



*ບາງຂໍ້ມູນ ທີ່ລວມຢູ່ໃນປື້ມຄູ່ມືຫົວນີ້ ອາດຈະໃຊ້ບໍ່ໄດ້ໃນຊ່ວງການຮຽນທາງໄກ. ກະລຸນາເຂົ້າເບິ່ງເວັບໄຊ U-46 Covid-19* ***https://www.u-46.org/Page/15532*** *ຫລື ຕິດຕໍ່ຫາອາຈານໃຫຍ່ໂຮງຮຽນຂອງທ່ານ ສໍາລັບຂໍ້ມູນໃໝ່ໆ.*

# ການສຶກສາສອງພາສາເພື່ອການປ່ຽນຜ່ານ (TBE)/ການຮ່ວມມື

ໃນສະຖານທີ່ແບບນີ້, ນັກຮຽນທີ່ພື້ນຖານພາສາໃນສັດສ່ວນສູງໄດ້ຮັບການສິດສອນການຮຽນຕົ້ນຕໍເປັນພາສາອັງກິດໄປພ້ອມກັບການສອນເປັນພາສາທີ່ໃຊ້ຢູ່ເຮືອນຜ່ານວິທີການຮ່ວມມືກັບຄູສອນ ESL ທີ່ມີໃບຮັບຮອງ ແລະ ຄູສອນພາສາກຳເນີດ (ເຊັ່ນວ່າ ພາສາໂປໂລຍ, ອູດູ, ກູຈາຣາດ ແລະ ພາສາລາວ). ໃຫ້ພາສາອັງກິດເປັນພາສາທີສອງ (ESL) ແລະ ເປົ້າໝາຍແມ່ນເພື່ອປ່ຽນຜ່ານເປັນພາສາອັງກິດ.

# ຫຼັກສູດການສອນເພື່ອການປ່ຽນຜ່ານ (TPI/ESL)

ຫຼັກສູດການສອນເພື່ອການປ່ຽນຜ່ານແມ່ນຫຼັກສູດທີ່ກຳນົດໃຫ້ເພື່ອຮັບໃຊ້ນັກຮຽນທີ່ມີສິດໄດ້ຮັບທີ່ມາຈາກພື້ນຖານພາສາທີ່ມີສັດສ່ວນຕໍ່າ. ຫຼັກສູດນີ້ໃຫ້ການສະໜັບສະໜູນເພື່ອຊ່ວຍໃຫ້ນັກຮຽນປະສົບຜົນສຳເລັດໃນວິຊາຮຽນຕ່າງໆ ແລະ ຮຽນຮູ້ພາສາອັງກິດ. ຫຼັກສູດນີ້ໃຫ້ການສອນເປັນພາສາອັງກິດໂດຍໃຊ້ *ການສອນພາສາອັງກິດປະສົມກັບເນື້ອຫາວິຊາຮຽນ (Sheltered English Instruction).* ຫ້ອງຮຽນເຫຼົ່ານີ້ນັບລວມເຂົ້າໃນຂໍ້ກຳນົດການຈົບຊັ້ນສຳລັບນັກຮຽນຊັ້ນອຸດົມ.

**ການຮ່ວມມື TBE ແລະ ພາສາອັງກິດເປັນພາສາທີສອງ**

**ຫຼັກສູດການສອນເພື່ອການປ່ຽນຜ່ານ (ຫຼັກສູດ TPI)**

**ໂຮງຮຽນປະຖົມ Liberty**

ກ່ອນໄວຮຽນ - ຊັ້ນທີ 6
**8:00 ໂມງເຊົ້າ – 2:00 ໂມງແລງ**
121 Naperville Road
Barlett, IL 60103
ໂທລະສັບ: 630/540-7680
ແຟັກ: 630/540-7666



### ການເປັນຕົວແທນຕາມພາສາ

ລາຍຊື່ຂ້າງລຸ່ມສະແດງເຖິງບາງພາສາຕ່າງໆຢູ່ພາຍໃນຫຼັກສູດ **ESL ແຕ່ຊັ້ນກຽມອະນຸບານຫາຊັ້ນຮຽນ 12** ໃນທົ່ວເຂດການສຶກສາ (ໂຮງຮຽນປະຖົມ Liberty , ມັດທະຍົມຕອນຕົ້ນ Abbott, ມັດທະຍົມຕອນຕົ້ນ Ellis, ມັດທະຍົມຕອນຕົ້ນ Kimball, ມັດທະຍົມຕອນຕົ້ນ Larsen, ມັດທະຍົມຕອນຕົ້ນ Tefft, ໂຮງຮຽນມັດທະຍົມຕອນປາຍ Bartlett, ໂຮງຮຽນມັດທະຍົມຕອນປາຍ Elgin, ໂຮງຮຽນມັດທະຍົມຕອນປາຍ Larkin, ໂຮງຮຽນມັດທະຍົມຕອນປາຍ South Elgin, ແລະ ໂຮງຮຽນມັດທະຍົມຕອນປາຍ Streamwood):

ພາສາອາຟຣິກາ
ພາສາອັລບານີ
ພາສາອາມຮາຣິກ
ພາສາອາຣັບ
ພາສາແອສຊີເຣຍ
ພາສາເບມບາ
ພາສາບອສເນຍ
ພາສາກຳປູເຈຍ
ພາສາຈີນກວ້າງຕຸ້ງ (ພາສາຈີນ)
ພາສາຊີບົວໂນ
ພາສາຝຣັ່ງ
ພາສາເຢຍລະມັນ
ພາສາເກຣັກ
ພາສາຈູກາຣາດ

ພາສາຮິນດີ
ພາສາອິຕາລີ
ພາສາຍີ່ປຸ່ນ
ພາສາເກົາຫຼີ
ພາສາລາວ
ພາສາມາເລ
ພາສາມາລາຢາລຳ
ພາສາຈີນກາງ
ພາສາມົງໂກນ
ພາສາປັອກຕຸຍການ
ພາສາໂຣມາເນຍ
ພາສາປານຈາບີ (ປັນຈາບີ)
ພາສາຟີລິບປິນ (ຕາກາລ໊ອກ)
ພາສາໂປໂລຍ

ພາສາຣັດເຊຍ
ພາສາສະໂລວັກ
ພາສາໂຊມາລີ
ພາສາຕາມິວ
ພາສາເຕລູກູ
ພາສາຕອງກາ
ພາສາອູດູ
ພາສາອຸຊເບກ
ພາສາຫວຽດນາມ
ພາສາໂຢຣູບາ





*ບາງຂໍ້ມູນ ທີ່ລວມຢູ່ໃນປຶ້ມຄູ່ມືຫົວນີ້ ອາດຈະໃຊ້ບໍ່ໄດ້ໃນຊ່ວງການຮຽນທາງໄກ. ກະລຸນາເຂົ້າເບິ່ງເວັບໄຊ U-46 Covid-19* ***https://www.u-46.org/Page/15532*** *ຫລື ຕິດຕໍ່ຫາອາຈານໃຫຍ່ໂຮງຮຽນຂອງທ່ານ ສຳລັບຂໍ້ມູນໃໝ່ໆ.*

# ຫຼັກສູດ ELL ຢູ່ລະດັບມັດທະຍົມ

ຫຼັກສູດ ELL ຢູ່ລະດັບມັດທະຍົມມີສອງຫຼັກສູດສໍາລັບນັກຮຽນຫຼັກສູດ ELL: ການສຶກສາສອງພາສາເພື່ອການປ່ຽນຜ່ານ (TBE) ເປັນພາສາສະເປນ ແລະ ຫຼັກສູດການສອນໄລຍະປ່ຽນຜ່ານ (TPI). ທັງສອງຫຼັກສູດແມ່ນມີໃຫ້ຢູ່ບັນດາໂຮງຮຽນຕໍ່ໄປນີ້: ໂຮງຮຽນມັດທະຍົມຕອນຕົ້ນ Abbott , ໂຮງຮຽນມັດທະຍົມຕອນຕົ້ນ Ellis, ໂຮງຮຽນມັດທະຍົມຕອນຕົ້ນ Kimball, ໂຮງຮຽນມັດທະຍົມຕອນຕົ້ນ Larsen, ໂຮງຮຽນມັດທະຍົມຕອນຕົ້ນ Tefft, ໂຮງຮຽນມັດທະຍົມຕອນປາຍ Bartlett, ໂຮງຮຽນມັດທະຍົມຕອນປາຍ Elgin, ໂຮງຮຽນມັດທະຍົມຕອນປາຍ Larkin, ໂຮງຮຽນມັດທະຍົມຕອນປາຍ South Elgin, ແລະ ໂຮງຮຽນມັດທະຍາມຕອນປາຍ Streamwood. ໂຮງຮຽນມັດທະຍົມຕອນຕົ້ນ Abbott, ໂຮງຮຽນມັດທະຍົມຕອນຕົ້ນ Ellis, ໂຮງຮຽນມັດທະຍົມຕອນຕົ້ນ Kimball, ໂຮງຮຽນມັດທະຍົມຕອນຕົ້ນ Larsen, ແລະ ໂຮງຮຽນມັດທະຍົມຕອນຕົ້ນ Tefft ຍັງສະເໜີໃຫ້ຫຼັກສູດສອງພາສາຢູ່ໃນລະດັບຊັ້ນຮຽນທີ 7 ແລະ 8. ນອກຈາກນີ້, ໂຮງຮຽນມັດທະຍົມຕອນປາຍ Bartlett, ໂຮງຮຽນມັດທະຍົມຕອນປາຍ Elgin, ໂຮງຮຽນມັດທະຍົມຕອນປາຍ Larkin, ໂຮງຮຽນມັດທະຍົມຕອນປາຍ South Elgin, ແລະ ໂຮງຮຽນມັດທະຍົມຕອນປາຍ Streamwood ຍັງສະເໜີໃຫ້ມີຫຼັກສູດສອງພາສາຢູ່ໃນລະດັບຊັ້ນຮຽນທີ 9 ແລະ 11.

## ຫຼັກສູດສອງພາສາ: ຊັ້ນຮຽນທີ 7 - 11

ນັກຮຽນທີ່ຈົດທະບຽນເຂົ້າຮ່ວມຫຼັກສູດສອງພາສາຢູ່ລະດັບໂຮງຮຽນມັດທະຍົມຕອນຕົ້ນໄດ້ຮັບການສອນເປັນພາສາສະເປນໃນວິຊາພາສາສະເປນ ແລະ ວິຊາສັງຄົມສຶກສາຢູ່ພາຍໃນໄລຍະສອງພາກຮຽນ. ຄູສອນສອງພາສາລວມເອົາສີ່ຂົງເຂດວິຊາພາສາ: ການຟັງ, ການເວົ້າ, ການອ່ານ ແລະ ການຂຽນເຂົ້າກັນເພື່ອສອນນັກຮຽນໃນການສອນວິຊາພາສາສະເປນ ແລະ ສັງຄົມສຶກສາ ຫຼື ວິຊາປະຫວັດສາດ. ຢູ່ໃນລະດັບໂຮງຮຽນມັດທະຍົມຕອນປາຍ, ນັກຮຽນສອງພາສາໃນຊັ້ນຮຽນທີ 9 ໄດ້ຮັບການສອນເປັນພາສາສະເປນໃນລະຫວ່າງຊົ່ວໂມງຮຽນວິຊາພາສາສະເປນ, ວິຊາຄະນິດສາດ ແລະ ວິຊາວິທະຍາສາດ. ໃນລະດັບຊັ້ນຮຽນທີ 10, ນັກຮຽນສອງພາສາໄດ້ຮັບການສອນເປັນພາສາສະເປນໃນລະຫວ່າງຊົ່ວໂມງຮຽນວິຊາພາສາສະເປນ ຫຼື ພາສາສະເປນ AP ແລະ ວັດທະນະທໍາ, ວິຊາຄະນິດສາດ, ແລະ ຊົ່ວໂມງຮຽນວິຊາສັງຄົມສຶກສາ. ຢູ່ທີ່ຊັ້ນຮຽນທີ 11, ນັກຮຽນສອງພາສາຈະໄດ້ຮຽນພາສາສະເປນໃນຈ່ອງສິລະປະພາສາສະເປນ, ການປ່ຽນແທນລໍ້າໜ້າ (AP) ພາສາສະເປນ ຫລື ຫ້ອງຮຽນ Dual Credit ຫລື ວິຊາເລືອກໜຶ່ງ ຫລື ສອງວິຊາ.

ນັກຮຽນຜູ້ທີ່ມີຄຸນສົມບັດໄດ້ຮັບການບໍລິການ EL ໄດ້ຮັບການສອນ ESL ໜຶ່ງໄລຍະ. ຄູສອນທີ່ມີໃບອະນຸຍາດວາງແຜນໄລຍະການຮຽນ ESL ເພື່ອຮັບປະກັນໃຫ້ມີກິດຈະກໍາຢ່າງເປັນລະບົບ ທີ່ຂະຫຍາຍຄວາມຄິດຂອງນັກຮຽນ ແລະ ພັດທະນາຄວາມເຂົ້າໃຈຢ່າງເລິກເພື່ອຕອບໂຕ້ກັບຂໍ້ຄວາມທີ່ມີລັກສະນະເປັນທິດສະດີ ແລະ ການໃຫ້ຂໍ້ມູນ ແລະ ເຂົ້າໃຈເນື້ອໃນການຮຽນຢ່າງຄົບຖ້ວນໃນສາມຂົງເຂດຂອງວິຊາດັ່ງກ່າວ. ຫຼັກສູດດັ່ງກ່າວແມ່ນປະຕິບັດຕາມກົດລະບຽບຂອງລັດ ແລະ ປະຕິບັດຕາມຫຼັກສູດທີ່ເຂດການສຶກສາອະນຸມັດ, ໃນຂະນະທີ່ຍັງພົບປະຫວັດການຮຽນ ແລະ ພາສາສາດຂອງນັກຮຽນຂອງພວກເຮົາ.

## ການຮຽນຮູ້ໜັງສື ESL ແບບເປັນກຸ່ມ: ຊັ້ນຮຽນທີ 12

ການຮຽນຮູ້ໜັງສືແບບເປັນກຸ່ມແມ່ນການເຊື່ອມສານລະຫວ່າງການອ່ານ ແລະ ການຂຽນໃນສອງໄລຍະຂອງ ESL. ຄູສອນ ESL ທີ່ມີໃບອະນຸຍາດລວມເອົາສີ່ຂົງເຂດຂອງວິຊາສິລະປະພາສາເຂົ້າກັນຄື: ການຟັງ, ການເວົ້າ, ການອ່ານ ແລະ ການຂຽນ. ການຮຽນຮູ້ໜັງສືແບບເປັນກຸ່ມປະກອບດ້ວຍກິດຈະກໍາທີ່ຂະຫຍາຍການຄິດຂອງນັກຮຽນ, ພັດທະນາຄວາມເຂົ້າໃຈຢ່າງເລິກເຊິ່ງ ແລະ ອະນຸຍາດໃຫ້ນັກຮຽນຕອບໂຕ້ກັບຂໍ້ຄວາມທີ່ມີລັກສະນະເປັນທິດສະດີ ແລະ ໃຫ້ຂໍ້ມູນໃນແບບທີ່ມີຈຸດສຸມ ແລະ ມີຈຸດປະສົງ. ວິທີການຮຽນໜັງສືທີ່ສົມດຸນໃຫ້ຄວາມສໍາຄັນກັບການຊອກຫາຄວາມໝາຍໃນຂະບວນການຕ່າງໆຂອງການອ່ານ ແລະ ການຂຽນ. ຫຼັກສູດດັ່ງກ່າວປະຕິບັດຕາມກົດລະບຽບຂອງລັດ ແລະ ປະຕິບັດຕາມຫຼັກສູດທີ່ເຂດການສຶກສາໄດ້ອະນຸມັດ, ໃນຂະນະທີ່ຍັງພົບປະຫວັດການຮຽນ ແລະ ພາສາສາດຂອງນັກຮຽນຂອງພວກເຮົາ. ຄູສອນໃຈ້ແຍກການສອນອີງຕາມລະດັບ ESL (WIDA) ແລະ ປະຫວັດການຮຽນຂອງນັກຮຽນ. ຄູສອນ ESL ວາງແຜນຢ່າງມີຍຸດທະສາດ ແລະ ສອນຄໍາສັບ ແລະ ພັດທະນາພາສາເພື່ອຮັບປະກັນຄວາມສໍາເລັດດ້ານການຮຽນຂອງນັກຮຽນ.

## ວິຊາຮຽນສໍາລັບນັກຮຽນ EL ໃນຊັ້ນຮຽນທີ 12

ວິຊາຮຽນທັງໝົດຖືກສອນເປັນພາສາສະເປນ (ລະຫັດວິຊາຮຽນ SB) ຫຼື ການສອນພາສາອັງກິດປະສົມກັບເນື້ອຫາວິຊາຮຽນ (ລະຫັດວິຊາຮຽນ ES). ຫຼັກສູດຕ່າງໆສອດຄ່ອງກັບມາດຕະຖານການສຶກສາ ແລະ ພາສາຂອງ ລັດ ແລະ ປະຕິບັດຕາມຫຼັກສູດທີ່ເຂດການສຶກສາໄດ້ອະນຸມັດ.
ຫຼັກສູດຕ່າງໆໄດ້ຮັບການອອກແບບມາເພື່ອພັດທະນາຄວາມຮູ້ໃນວິຊາຮຽນຕ່າງໆ ແລະ ພາສາໃນການຮຽນເປັນພາສາອັງກິດ ແລະ ພາສາສະເປນ. ນັກຮຽນ ESL ເຂົ້າຮ່ວມຫຼັກສູດເຫຼົ່ານີ້ ເຊິ່ງໄດ້ຮັບການສອນດ້ວຍ ວິທີການທີ່ດີທີ່ສຸດ ແລະ ຍຸດທະສາດການສອນສໍາລັບຜູ້ຮຽນພາສາທີສອງ.

ເພື່ອຮັບເອົາບົດສັງລວມຂອງຫຼັກສູດ ELL ຢູ່ໃນ ລະດັບມັດທະຍົມ ກະລຸນາເຂົ້າເບິ່ງ www.u-46.org ຢູ່ພາຍໃຕ້ຫົວຂໍ້ ພະແນກ >> ຜູ້ຮຽນພາສາອັງກິດ.

# ໂຮງຮຽນມັດທະຍົມຕອນຕົ້ນ ELL (ຫຼັກສູດ TBE/TPI)

## ໂຮງຮຽນມັດທະຍົມຕອນຕົ້ນ Abbott




**Se Habla Español**

| | |
|---|---|
| **ທີ່ຢູ່:** | 949 Van Street Elgin, IL 60123 |
| **ໂທລະສັບ:** | 847/888-5160 |
| **ເວັບໄຊ:** | https://www.u-46.org/abbott |
| **ເບີໂທລະສັບການເຂົ້າຮ່ວມ:** | 847/888-5165 |
| **ຜູ້ອຳນວຍການ:** | Christine Zugel |
| **ສ່ວນຕໍ່ສາຍຫ້ອງໜ້າຄູສອນ ELL:** | x8122 |
| **ສ່ວນຕໍ່ສາຍຜູ້ປະສານງານ ການຮຽນ ELL ຢູ່ເຮືອນ:** | x7169 |

**ໂຮງຮຽນມັດທະຍົມຕອນຕົ້ນ Abbott ຕາຕະລາງເວລາຮຽນ**

ເວລາເຂົ້າຮຽນ: 8:50

| | | |
|---|---|---|
| ຊ່ວງທີ 1 | 9:00 – 9:45 | |
| ຊ່ວງທີ 2 | 9:49 – 10:34 | |
| ຊ່ວງທີ 3 | 10:38 – 11:23 | ອາຫານທ່ຽງ |
| ຊ່ວງທີ 4 | 11:27 – 12:12 | ອາຫານທ່ຽງ |
| ຊ່ວງທີ 5 | 12:16 – 1:01 | ອາຫານທ່ຽງ |
| ຊ່ວງທີ 6 | 1:05 – 1:50 | ອາຫານທ່ຽງ |
| ຊ່ວງທີ 7 | 1:54 – 2:39 | |
| ຊ່ວງທີ 8 | 2:43 – 3:28 | |

ສຳລັບຕາຕະລາງການສຶກສາທາງໄກ ສຳລັບສົກຮຽນ 20-21 ເຂົ້າເບິ່ງເວັບໄຊ https://www.u-46.org/Page/16851

## ໂຮງຮຽນມັດທະຍົມຕອນຕົ້ນ Ellis




**Se Habla Español**

| | |
|---|---|
| **ທີ່ຢູ່:** | 225 South Liberty Street Elgin, IL 60120 |
| **ໂທລະສັບ:** | 847/888-5151 |
| **ເວັບໄຊ:** | https://www.u-46.org/ellis |
| **ເບີໂທລະສັບການເຂົ້າຮ່ວມ:** | 847/888-5150 |
| **ຜູ້ອຳນວຍການ:** | Yvette González-Collins |
| **ສ່ວນຕໍ່ສາຍຫ້ອງໜ້າຄູສອນ ELL:** | x5350 |
| **ສ່ວນຕໍ່ສາຍຜູ້ປະສານງານ ການຮຽນ ELL ຢູ່ເຮືອນ:** | x4165 |

**ໂຮງຮຽນມັດທະຍົມຕອນຕົ້ນ Ellis ຕາຕະລາງເວລາຮຽນ**

ເວລາເຂົ້າຮຽນ: 8:50

| | | |
|---|---|---|
| ຊ່ວງທີ 1 | 9:00 – 9:45 | |
| ຊ່ວງທີ 2 | 9:48 – 10:33 | |
| ຊ່ວງທີ 3 | 10:36 – 11:21 | ອາຫານທ່ຽງ |
| ຊ່ວງທີ 4 | 11:24 – 12:09 | ອາຫານທ່ຽງ |
| ຊ່ວງທີ 5 | 12:12 – 12:57 | ອາຫານທ່ຽງ |
| ຊ່ວງທີ 6 | 1:00 – 1:45 | ອາຫານທ່ຽງ |
| ຊ່ວງທີ 7 | 1:48 – 2:33 | |
| ຊ່ວງທີ 8 | 2:36 – 3:21 | |

ສຳລັບຕາຕະລາງການສຶກສາທາງໄກ ສຳລັບສົກຮຽນ 20-21 ເຂົ້າເບິ່ງເວັບໄຊ https://www.u-46.org/Page/16851



*ບາງຂໍ້ມູນ ທີ່ລວມຢູ່ໃນປຶ້ມຄູ່ມືຫົວນີ້ ອາດຈະໃຊ້ບໍ່ໄດ້ໃນຊ່ວງການຮຽນທາງໄກ. ກະລຸນາເຂົ້າເບິ່ງເວັບໄຊ U-46 Covid-19* ***https://www.u-46.org/Page/15532*** *ຫລື ຕິດຕໍ່ຫາອາຈານໃຫຍ່ໂຮງຮຽນຂອງທ່ານ ສຳລັບຂໍ້ມູນໃໝ່ໆ.*

# ໂຮງຮຽນມັດທະຍົມຕອນຕົ້ນ Kimball




**Se Habla Español**

| | |
|---|---|
| **ທີ່ຢູ່:** | 451 North McLean Blvd. Elgin, IL 60123 |
| **ໂທລະສັບ:** | 847/888-5290 |
| **ເວັບໄຊ:** | https://www.u-46.org/kimball |
| **ເບີໂທລະສັບການເຂົ້າຮ່ວມ:** | 847/888-5290 |
| **ຜູ້ອຳນວຍການ:** | Charlotte Coleman |
| **ສ່ວນຕໍ່ສາຍຫົວໜ້າຄູສອນ ELL:** | x2277 |
| **ສ່ວນຕໍ່ສາຍຜູ້ປະສານງານ ການຮຽນ ELL ຢູ່ເຮືອນ:** | x4143 |

**ໂຮງຮຽນມັດທະຍົມຕອນຕົ້ນ Kimball**
**ຕາຕະລາງເວລາຮຽນ**

ເວລາເຂົ້າຮຽນ: 8:50
ຊ່ວງທີ 1 9:00 – 9:45
ຊ່ວງທີ 2 9:49 – 10:34
ຊ່ວງທີ 3 10:38 – 11:23 ອາຫານທ່ຽງ
ຊ່ວງທີ 4 11:27 – 12:12 ອາຫານທ່ຽງ
ຊ່ວງທີ 5 12:16 – 1:01 ອາຫານທ່ຽງ
ຊ່ວງທີ 6 1:05 – 1:50 ອາຫານທ່ຽງ
ຊ່ວງທີ 7 1:54 – 2:39
ຊ່ວງທີ 8 2:43 – 3:28

ສຳລັບຕາຕະລາງການສຶກສາທາງໄກ
ສຳລັບສົກຮຽນ 20-21 ເຂົ້າເບິ່ງເວັບໄຊ
https://www.u-46.org/Page/16851

---

# ໂຮງຮຽນມັດທະຍົມຕອນຕົ້ນ Larsen




**Se Habla Español**

| | |
|---|---|
| **ທີ່ຢູ່:** | 665 Dundee Avenue Elgin, IL 60120 |
| **ໂທລະສັບ:** | 847/888-5250 |
| **ເວັບໄຊ:** | https://www.u-46.org/larsen |
| **ເບີໂທລະສັບການເຂົ້າຮ່ວມ:** | 847/888-5250 |
| **ຜູ້ອຳນວຍການ:** | Gina Crespo |
| **ສ່ວນຕໍ່ສາຍຫົວໜ້າຄູສອນ ELL:** | x5231 |
| **ສ່ວນຕໍ່ສາຍຜູ້ປະສານງານ ການຮຽນ ELL ຢູ່ເຮືອນ:** | x5251 |

**ໂຮງຮຽນມັດທະຍົມຕອນຕົ້ນ Larsen**
**ຕາຕະລາງເວລາຮຽນ**

ເວລາເຂົ້າຮຽນ: 8:50
ຊ່ວງທີ 1 9:00 – 9:45
ຊ່ວງທີ 2 9:49 – 10:34
ຊ່ວງທີ 3 10:38 – 11:23 ອາຫານທ່ຽງ
ຊ່ວງທີ 4 11:27 – 12:12 ອາຫານທ່ຽງ
ຊ່ວງທີ 5 12:16 – 1:01 ອາຫານທ່ຽງ
ຊ່ວງທີ 6 1:05 – 1:50 ອາຫານທ່ຽງ
ຊ່ວງທີ 7 1:54 – 2:39
ຊ່ວງທີ 8 2:43 – 3:28

ສຳລັບຕາຕະລາງການສຶກສາທາງໄກ
ສຳລັບສົກຮຽນ 20-21 ເຂົ້າເບິ່ງເວັບໄຊ
https://www.u-46.org/Page/16851



*ບາງຂໍ້ມູນ ທີ່ລວມຢູ່ໃນປຶ້ມຄູ່ມືຫົວນີ້ ອາດຈະໃຊ້ບໍ່ໄດ້ໃນຊ່ວງການຮຽນທາງໄກ. ກະລຸນາເຂົ້າເບິ່ງເວັບໄຊ U-46 Covid-19* ***https://www.u-46.org/Page/15532*** *ຫລື ຕິດຕໍ່ຫາອາຈານໃຫຍ່ໂຮງຮຽນຂອງທ່ານ ສຳລັບຂໍ້ມູນໃໝ່ໆ.*

## ໂຮງຮຽນມັດທະຍົມຕອນຕົ້ນ Tefft




**Se Habla Español**

| | |
|---|---|
| **ທີ່ຢູ່:** | 1100 Shirley Avenue |
| **ໂທລະສັບ:** | 630/213-5535 |
| **ເວັບໄຊ:** | https://www.u-46.org/tefft |
| **ເບີໂທລະສັບການເຂົ້າຮ່ວມ:** | 630/213-5535 |
| **ຜູ້ອຳນວຍການ:** | ດຣ. Luis Fernando de León |
| **ສ່ວນຕໍ່ສາຍຫ້ອງໜ້າຄູສອນ ELL:** | x7010 |
| **ສ່ວນຕໍ່ສາຍຜູ້ປະສານງານການຮຽນ ELL ຢູ່ເຮືອນ:** | x5919 |

**ໂຮງຮຽນມັດທະຍົມຕອນຕົ້ນ Tefft**
**ຕາຕະລາງເວລາຮຽນ**

ເວລາເຂົ້າຮຽນ: 8:50
ຊ່ວງທີ 1 9:00 – 9:45
ຊ່ວງທີ 2 9:49 – 10:34
ຊ່ວງທີ 3 10:38 – 11:23 ອາຫານທ່ຽງ
ຊ່ວງທີ 4 11:27 – 12:12 ອາຫານທ່ຽງ
ຊ່ວງທີ 5 12:16 – 1:01 ອາຫານທ່ຽງ
ຊ່ວງທີ 6 1:05 – 1:50 ອາຫານທ່ຽງ
ຊ່ວງທີ 7 1:54 – 2:39
ຊ່ວງທີ 8 2:43 – 3:28

ສຳລັບຕາຕະລາງການສຶກສາທາງໄກ
ສຳລັບສົກຮຽນ 20-21 ເຂົ້າເບິ່ງເວັບໄຊ
https://www.u-46.org/Page/16851

# ໂຮງຮຽນມັດທະຍົມຕອນປາຍ ELL (ຫຼັກສູດTBE/TPI)

## ໂຮງຮຽນມັດທະຍົມຕອນປາຍ Bartlett




**Se Habla Español**

| | |
|---|---|
| **ທີ່ຢູ່:** | 7001 Schick Rd. Bartlett, IL 60103 |
| **ໂທລະສັບ:** | 630/372-4700 |
| **ເວັບໄຊ:** | https://www.u-46.org/bhs |
| **ເບີໂທລະສັບການເຂົ້າຮ່ວມ:** | 630/372-4700 x4710 |
| **ຜູ້ອຳນວຍການ:** | Mike Demovsky |
| **ຕໍ່ສາຍເຖິງຜູ້ເບິ່ງແຍງລະບົບ ELL:** | x4729 |
| **ສ່ວນຕໍ່ສາຍຜູ້ປະສານງານການຮຽນ ELL ຢູ່ເຮືອນ:** | x4725 |

**ໂຮງຮຽນມັດທະຍົມຕອນປາຍ Bartlett**
**ຕາຕະລາງເວລາຮຽນ**

ລະຄັງເຕືອນ: 7:30
ລະຄັງເຕືອນ: 7:35
ຊ່ວງທີ 1 7:40 – 8:30
ຊ່ວງທີ 2 8:35 – 9:25
ຊ່ວງທີ 3 9:30 – 10:20
ຊ່ວງທີ 4 10:25 – 11:15 ອາຫານທ່ຽງ
ຊ່ວງທີ 5 11:20 – 12:10 ອາຫານທ່ຽງ
ຊ່ວງທີ 6 12:15 – 1:05 ອາຫານທ່ຽງ
ຊ່ວງທີ 7 1:10 – 2:00 ອາຫານທ່ຽງ
ຊ່ວງທີ 8 2:05 – 2:55

ສຳລັບຕາຕະລາງການສຶກສາທາງໄກ
ສຳລັບສົກຮຽນ 20-21 ເຂົ້າເບິ່ງເວັບໄຊ
https://www.u-46.org/Page/16851


*ບາງຂໍ້ມູນ ທີ່ລວມຢູ່ໃນປຶ້ມຄູ່ມືຫົວນີ້ ອາດຈະໃຊ້ບໍ່ໄດ້ໃນຊ່ວງການຮຽນທາງໄກ. ກະລຸນາເຂົ້າເບິ່ງເວັບໄຊ U-46 Covid-19* ***https://www.u-46.org/Page/15532*** *ຫຼື ຕິດຕໍ່ຫາອາຈານໃຫຍ່ໂຮງຮຽນຂອງທ່ານ ສຳລັບຂໍ້ມູນໃໝ່ໆ.*

# ໂຮງຮຽນມັດທະຍົມຕອນປາຍ Elgin




**Se Habla Español**

| | |
|---|---|
| **ທີ່ຢູ່:** | 1200 Maroon Drive. Elgin, IL 60103 |
| **ໂທລະສັບ:** | 847/888-5100 |
| **ເວັບໄຊ:** | https://www.u-46.org/ehs |
| **ເບີໂທລະສັບການເຂົ້າຮ່ວມ:** | 847/888-5100 x5110 |
| **ຜູ້ອຳນວຍການ:** | Krystal Thomas |
| **ຕໍ່ສາຍເຖິງຜູ້ເບິ່ງແຍງລະບົບ ELL:** | x4857 |
| **ສ່ວນຕໍ່ສາຍຜູ້ປະສານງານການຮຽນ ELL ຢູ່ເຮືອນ:** | x5123 |

**ໂຮງຮຽນມັດທະຍົມຕອນປາຍ Elgin**
**ຕາຕະລາງເວລາຮຽນ**

ລະຄັງເຕືອນ: 7:30
ຊ່ວງທີ 1 7:40 – 8:30
ຊ່ວງທີ 2 8:35 – 9:25
ຊ່ວງທີ 3 9:30 – 10:20
ຊ່ວງທີ 4 10:25 – 11:15 ອາຫານທ່ຽງ
ຊ່ວງທີ 5 11:20 – 12:10 ອາຫານທ່ຽງ
ຊ່ວງທີ 6 12:15 – 1:05 ອາຫານທ່ຽງ
ຊ່ວງທີ 7 1:10 – 2:00 ອາຫານທ່ຽງ
ຊ່ວງທີ 8 2:05 – 2:55

ສຳລັບຕາຕະລາງການສຶກສາທາງໄກ ສຳລັບສົກຮຽນ 20-21 ເຂົ້າເບິ່ງເວັບໄຊ https://www.u-46.org/Page/16851

# ໂຮງຮຽນມັດທະຍົມຕອນປາຍ Larkin




**Se Habla Español**

| | |
|---|---|
| **ທີ່ຢູ່:** | 1475 Larkin Avenue. Elgin, IL 60123 |
| **ໂທລະສັບ:** | 847/888-5200 |
| **ເວັບໄຊ:** | https://www.u-46.org/lhs |
| **ເບີໂທລະສັບການເຂົ້າຮ່ວມ:** | 847/888-5200 x5175 |
| **ຜູ້ອຳນວຍການ:** | Krystal Bush |
| **ຕໍ່ສາຍເຖິງຜູ້ເບິ່ງແຍງລະບົບ ELL:** | x5412 |
| **ສ່ວນຕໍ່ສາຍຜູ້ປະສານງານການຮຽນ ELL ຢູ່ເຮືອນ:** | x5212 |

**ໂຮງຮຽນມັດທະຍົມຕອນປາຍ Elgin**
**ຕາຕະລາງເວລາຮຽນ**

ລະຄັງເຕືອນ: 7:30
ຊ່ວງທີ 1 7:40 – 8:30
ຊ່ວງທີ 2 8:35 – 9:25
ຊ່ວງທີ 3 9:30 – 10:20
ຊ່ວງທີ 4 10:25 – 11:15 ອາຫານທ່ຽງ
ຊ່ວງທີ 5 11:20 – 12:10 ອາຫານທ່ຽງ
ຊ່ວງທີ 6 12:15 – 1:05 ອາຫານທ່ຽງ
ຊ່ວງທີ 7 1:10 – 2:00 ອາຫານທ່ຽງ
ຊ່ວງທີ 8 2:05 – 2:55

ສຳລັບຕາຕະລາງການສຶກສາທາງໄກ ສຳລັບສົກຮຽນ 20-21 ເຂົ້າເບິ່ງເວັບໄຊ https://www.u-46.org/Page/16851



*ບາງຂໍ້ມູນ ທີ່ລວມຢູ່ໃນປຶ້ມຄູ່ມືຫົວນີ້ ອາດຈະໃຊ້ບໍ່ໄດ້ໃນຊ່ວງການຮຽນທາງໄກ. ກະລຸນາເຂົ້າເບິ່ງເວັບໄຊ U-46 Covid-19* ***https://www.u-46.org/Page/15532*** *ຫລື ຕິດຕໍ່ຫາອາຈານໃຫຍ່ໂຮງຮຽນຂອງທ່ານ ສຳລັບຂໍ້ມູນໃໝ່ໆ.*

# ໂຮງຮຽນມັດທະຍົມຕອນປາຍ South Elgin




**Se Habla Español**

| | |
|---|---|
| **ທີ່ຢູ່:** | 760 East Main Street. South Elgin, IL 60177 |
| **ໂທລະສັບ:** | 847/289-3760 |
| **ເວັບໄຊ:** | https://www.u-46.org/sehs |
| **ເບີໂທລະສັບການເຂົ້າຮ່ວມ:** | 847/289-3760 x3365 |
| **ຜູ້ອໍານວຍການ:** | ດຣ. Kurt Johansen |
| **ຕໍ່ສາຍເຖິງຜູ້ເບິ່ງແຍງລະບົບ ELL:** | X3344 |
| **ສ່ວນຕໍ່ສາຍຜູ້ປະສານງານການຮຽນ ELL ຢູ່ເຮືອນ:** | x3327 |

**ໂຮງຮຽນມັດທະຍົມຕອນປາຍ South Elgin ຕາຕະລາງເວລາຮຽນ**

*ລະຄັງເຕືອນຊ່ວງທີ 00: 7:10*
ຊ່ວງທີ – 00 7:12 – 7:40
*ລະຄັງເຕືອນຊ່ວງທີ 00: 7:30 ໂມງເຊົ້າ*
ຊ່ວງທີ 01 7:40 – 8:30
ຊ່ວງທີ 02 8:35 – 9:25
ຊ່ວງທີ 03 9:30 – 10:20
ຊ່ວງທີ 04A 10:25 – 10:48 ອາຫານທ່ຽງ
ຊ່ວງທີ 04B 10:52 – 11:15 ອາຫານທ່ຽງ
ຊ່ວງທີ 05A 11:20 – 11:43 ອາຫານທ່ຽງ
ຊ່ວງທີ 05B 11:47 – 12:10 ອາຫານທ່ຽງ
ຊ່ວງທີ 06A 12:15 – 12:38 ອາຫານທ່ຽງ
ຊ່ວງທີ 06B 12:42 – 1:05 ອາຫານທ່ຽງ
ຊ່ວງທີ 07A 1:10 – 1:33 ອາຫານທ່ຽງ
ຊ່ວງທີ 07B 1:37 – 2:00 ອາຫານທ່ຽງ
ຊ່ວງທີ 8 2:05 – 2:55
ສໍາລັບຕາຕະລາງການສຶກສາທາງໄກ ສໍາລັບສົກຮຽນ 20-21 ເຂົ້າເບິ່ງເວັບໄຊ https://www.u-46.org/Page/16851

# ໂຮງຮຽນມັດທະຍົມຕອນປາຍ Streamwood




**Se Habla Español**

| | |
|---|---|
| **ທີ່ຢູ່:** | 701 W. Schaumburg Road. Streamwood, IL 60107 |
| **ໂທລະສັບ:** | 630/213-5500 |
| **ເວັບໄຊ:** | https://www.u-46.org/shs |
| **ເບີໂທລະສັບການເຂົ້າຮ່ວມ:** | 630/213-5500 x551 |
| **ຜູ້ອໍານວຍການ:** | ດຣ. Jennifer Van Deusen |
| **ຕໍ່ສາຍເຖິງຜູ້ເບິ່ງແຍງລະບົບ ELL:** | X4956 |
| **ສ່ວນຕໍ່ສາຍຜູ້ປະສານງານການຮຽນ ELL ຢູ່ເຮືອນ:** | x4908 |

**ໂຮງຮຽນມັດທະຍົມຕອນປາຍ Streamwood ຕາຕະລາງເວລາຮຽນ**

ລະຄັງເຕືອນ: 7:25
ຊ່ວງທີ 1 7:40 – 8:30
ຊ່ວງທີ 2 8:35 – 9:25
ຊ່ວງທີ 3 9:30 – 10:20
ຊ່ວງທີ 4 10:25 – 11:15 ອາຫານທ່ຽງ
ຊ່ວງທີ 5 11:20 – 12:10 ອາຫານທ່ຽງ
ຊ່ວງທີ 6 12:15 – 1:05 ອາຫານທ່ຽງ
ຊ່ວງທີ 7 1:10 – 2:00 ອາຫານທ່ຽງ
ຊ່ວງທີ 8 2:05 – 2:55

ສໍາລັບຕາຕະລາງການສຶກສາທາງໄກ ສໍາລັບສົກຮຽນ 20-21 ເຂົ້າເບິ່ງເວັບໄຊ https://www.u-46.org/Page/16851



*ບາງຂໍ້ມູນ ທີ່ລວມຢູ່ໃນປຶ້ມຄູ່ມືຫົວນີ້ ອາດຈະໃຊ້ບໍ່ໄດ້ໃນຊ່ວງການຮຽນທາງໄກ. ກະລຸນາເຂົ້າເບິ່ງເວັບໄຊ U-46 Covid-19* ***https://www.u-46.org/Page/15532*** *ຫລື ຕິດຕໍ່ຫາອາຈານໃຫຍ່ໂຮງຮຽນຂອງທ່ານ ສໍາລັບຂໍ້ມູນໃໝ່ໆ.*

# ຂ້ອຍສາມາດເບິ່ງຂໍ້ມູນເພີ່ມເຕີມກ່ຽວກັບຫຼັກສູດຜູ້ຮຽນພາສາອັງກິດໄດ້ຢູ່ໃສ

ສໍາລັບຂໍ້ມູນເພີ່ມເຕີມ ໃຫ້ເຂົ້າໄປຫາ ຫຼື ໂທຫາ:

### ຫ້ອງການບໍລິການການສຶກສາສໍາລັບຜູ້ຮຽນພາສາອັງກິດ

ສູນບໍລິການການສຶກສາ
355 East Chicago Street, 3rd Floor
Elgin, IL 60120
(847) 888-5000 ຕໍ່ສາຍ 5331 ຫຼື 5332
ແຟັກ (847) 888-7189

### ສູນຕ້ອນຮັບຄອບຄົວ

ສູນບໍລິການການສຶກສາ
355 E. Chicago St.
Second floor, Room 231
Elgin, IL 60120
ໂທລະສັບ: (847) 888-5000 ຕໍ່ສາຍ 6038
ແຟັກ (847) 888-7189



ສາມາດຕິດຕໍ່ຫາສາຍຊ່ວຍເຫຼືອ ***Español*** ໄດ້ທີ່ເບີ **(847) 695-8686** ແລະ ມັນມີຈຸດປະສົງເປັນແຫຼ່ງໃຫ້ຄໍາແນະນໍາ ແລະ ຂໍ້ມູນທີ່ເຊື່ອຖືໄດ້ສໍາລັບຜູ້ໂທທີ່ເວົ້າພາສາສະເປນ ຫຼື ພາສາອັງກິດ ທີ່ມີຄໍາຖາມທີ່ກ່ຽວຂ້ອງກັບການສຶກສາ, ແຫຼ່ງການຊ່ວຍເຫຼືອຊຸມຊົນ ແລະ ໜ່ວຍງານສໍາລັບຊຸມຊົນທີ່ເວົ້າພາສາສະເປນ.

ສາຍຊ່ວຍເຫຼືອ ***Español*** ໃຫ້ບໍລິການວັນຈັນ ເຖິງ ວັນສຸກ ຕັ້ງແຕ່ເວລາ 7:00 ໂມງເຊົ້າ ຫາ 4:00 ໂມງແລງ



ສໍາລັບຂໍ້ມູນເພີ່ມເຕີມກ່ຽວກັບຫຼັກສູດ ELL ເປັນພາສາອັງກິດ ແລະ ພາສາສະເປນ ໃຫ້ເຂົ້າໄປທີ່ເວັບໄຊຂອງພວກເຮົາທີ່ www.u-46.org ພາຍໃຕ້ຫົວຂໍ້ ພະແນກ >> ຜູ້ຮຽນພາສາອັງກິດ.



*ບາງຂໍ້ມູນ ທີ່ລວມຢູ່ໃນປຶ້ມຄູ່ມືຫົວນີ້ ອາດຈະໃຊ້ບໍ່ໄດ້ໃນຊ່ວງການຮຽນທາງໄກ. ກະລຸນາເຂົ້າເບິ່ງເວັບໄຊ U-46 Covid-19* ***https://www.u-46.org/Page/15532*** *ຫລື ຕິດຕໍ່ຫາອາຈານໃຫຍ່ໂຮງຮຽນຂອງທ່ານ ສໍາລັບຂໍ້ມູນໃໝ່ໆ.*

# MTSS – ລະບົບການສະໜັບສະໜູນແບບຫຼາຍຊັ້ນ

ລະບົບການສະໜັບສະໜູນແບບຫຼາຍຊັ້ນ (MTSS) ແມ່ນຮູບແບບການສະໜັບສະໜູນແບບລວມເຂົ້າກັນ 3 ຊັ້ນ ທີ່ຕອບສະໜອງຄວາມຕ້ອງການຂອງນັກຮຽນທຸກຄົນຜ່ານຄວາມຕໍ່ເນື່ອງທີ່ສອດຄ່ອງຂອງການປະຕິບັດທີ່ໃຊ້ການວິໄຈ ແລະ ທົ່ວທັງລະບົບກວ້າງ. MTSS ໄດ້ເນັ້ນໃສ່ການຮຽນຮູ້ທາງວິຊາການ, ອາລົມທາງສັງຄົມ ແລະ ພຶດຕິກຳ. ມັນແມ່ນໂຄງຮ່າງທີ່ເປັນລະບົບ ແລະ ການປ້ອງກັນທີ່ໃຊ້ໃນການແກ້ໄຂບັນຫາໂດຍໃຊ້ຂໍ້ມູນທີ່ເປັນພື້ນຖານສຳລັບການປັບປຸງຜົນຮັບຂອງນັກຮຽນທຸກຄົນຜ່ານການຮ່ວມມືກັນຂອງຄອບຄົວ, ໂຮງຮຽນ ແລະ ຊຸມຊົນ.




ຮູບແບບທີ່ແບ່ງເປັນສາມຊັ້ນນີ້ໃຫ້ການສິດສອນທີ່ແຕກຕ່າງກັນໃນລະດັບທົ່ວໄປ ຫຼື ຊັ້ນທີ I ເພື່ອຕອບສະໜອງຄວາມຕ້ອງການຂອງນັກຮຽນໃນຫ້ອງຮຽນ. ນັກຮຽນທຸກຄົນໄດ້ຮັບການສອນສຳຄັນໂດຍອີງຕາມຫຼັກຖານພ້ອມການສະໜັບສະໜູນໃນຫ້ອງຮຽນ. ນັກຮຽນທີ່ຕ້ອງການຄວາມຊ່ວຍເຫຼືອເພີ່ມເຕີມໄດ້ຮັບການແຊກແຊງຊ່ວຍເຫຼືອທີ່ມີເປົ້າໝາຍໃນຂົງເຂດທີ່ເຂົາເຈົ້າຕ້ອງການໃນຊັ້ນທີ II ແລະ III. ການແຊກແຊງຊ່ວຍເຫຼືອທັງໝົດມີພື້ນຖານຈາກການສຶກສາຄົ້ນຄວ້າວິໄຈ, ກຳນົດການຂາດດຸນທັກສະທີ່ມີເປົ້າໝາຍ ແລະ ໄດ້ຮັບດ້ວຍຄວາມຖືກຕ້ອງ. ນັກຮຽນຈະໄດ້ການແຊກແຊງໃນການຮຽນຮູ້ໜັກຂຶ້ນ ແລະ ໄລຍະເວລາເພີ່ມຂຶ້ນເພື່ອຕອບກັບຄວາມຕ້ອງການຂອງເຂົາເຈົ້າໃນນັກຮຽນກຸ່ມນ້ອຍໆ 4-5 ຄົນໃນຊັ້ນທີ II. ຄວາມຄືບໜ້າຈະໄດ້ຮັບການກວດກາໃນໄລຍະ 6-8 ອາທິດ ແລະ ຈະມີການດັດປັບ ຕາມຄວາມຕ້ອງການ ອີງຕາມຂໍ້ມູນທີ່ໄດ້ຮັບຈາກການຕິດຕາມຄວາມຄືບໜ້າຢ່າງຕໍ່ເນື່ອງ. ນັກຮຽນຫຼາຍຄົນທີ່ກຳລັງຕອບສະໜອງແມ່ນຖືກອອກຈາກການແຊກແຊງຊ່ວຍເຫຼືອ, ໃນຂະນະທີ່ນັກຮຽນຫຼາຍຄົນບໍ່ໄດ້ຕອບສະໜອງຄວາມກ້າວໜ້າໃນການຈັດວຽກການສະໜັບສະໜູນຢ່າງເຂັ້ມງວດເພີ່ມຂຶ້ນໃນຊັ້ນທີ II ແລະ/ຫຼື ຊັ້ນທີ III. ການຊ່ວຍເຫຼືອຊັ້ນທີ II ແມ່ນຈະເຂັ້ມງວດຫລາຍຂຶ້ນ ແລະ ເນັ້ນສະເພາະບຸກຄົນສຳລັບນັກຮຽນ ພ້ອມທັງມີການຕິດຕາມຄວາມຄືບໜ້າໃນແຕ່ລະອາທິດ. ມາດຖານການເຂົ້າ ແລະ ອອກ ຈະຖືກນຳໃຊ້ກຳນົດສິ່ງທີ່ຈະຊ່ວຍເຫລືອ ແລະ ນັກຮຽນທີ່ໄດ້ຮັບການແຊກແຊງຊ່ວຍເຫລືອອາດຈະຕ້ອງມີເປົ້າໝາຍສຸດທ້າຍ ຄືການມີນັກຮຽນທີ່ປະສົບຜົນສຳເລັດ ຫລື ກາຍລະດັບຊັ້ນ ໃນຫ້ອງຮຽນປົກກະຕິຂອງເຂົາເຈົ້າ.

## ຂະບວນການນຳສົ່ງ



ນັກຮຽນທີ່ກຳລັງປະສົບບັນຫາຫຍຸ້ງຍາກໃນໂຮງຮຽນອາດຈະຖືກນຳສົ່ງຕໍ່ຫາທີມງານບໍລິການຂອງໂຮງຮຽນໂດຍຄູ, ພໍ່ແມ່, ຜູ້ອຳນວຍການ ຫຼື ບຸກຄົນທີ່ກ່ຽວຂ້ອງອື່ນໆ. ນັກຮຽນທີ່ໄດ້ຮັບການແຊກແຊງຊ່ວຍເຫຼືອໃນຮູບແບບ MTSS ໃນຊັ້ນທີ III ຍັງສາມາດຖືກສະເໜີຕໍ່ທີມງານບໍລິການອີກດ້ວຍ. ແນວໃດກໍຕາມ, ຂັ້ນຕອນ MTSS ບໍ່ສາມາດຖືກໃຊ້ເພື່ອເຮັດໃຫ້ເກີດຄວາມລັກຊ້າ ຫຼື ປະຕິເສດການປະເມີນຜົນຂອງນັກຮຽນພາຍໃຕ້ກົດໝາຍວ່າດ້ວຍການສຶກສາສຳລັບບຸກຄົນທີ່ມີຄວາມພິການ (IDEA). ທີມງານບໍລິການທົບທວນການນຳສົ່ງ ແລະ ກຳນົດວ່າການປະເມີນຜົນກໍລະນີສຶກສາໃນເບື້ອງຕົ້ນຈະຖືກດຳເນີນການຫຼືບໍ່.

ພໍ່ແມ່ໄດ້ຮັບເຊີນເຂົ້າຮ່ວມກອງປະຊຸມທີມງານບໍລິການຂອງລູກຂອງເຂົາເຈົ້າ. ການນຳສົ່ງສຳລັບການປະເມີນຜົນນີ້ຄວນຖືກສົ່ງຫາຫົວໜ້າອາຄານ. ໂດຍອີງຕາມການທົບທວນຂອງທີມງານບໍລິການ, ພໍ່ແມ່ໄດ້ຮັບແຈ້ງເປັນລາຍລັກອັກສອນກ່ຽວກັບການຕັດສິນໃຈຂອງທີມງານ. ຄຳຍິນຍອມເປັນລາຍລັກອັກສອນຂອງພໍ່ແມ່ຕ້ອງໄດ້ຮັບກ່ອນທີ່ຈະເລີ່ມການປະເມີນກໍລະນີສຶກສາໃນເບື້ອງຕົ້ນ.

ຫຼັງຈາກສຳເລັດການປະເມີນຜົນກໍລະນີສຶກສາແລ້ວ, ພໍ່ແມ່ໄດ້ຮັບເຊີນໃຫ້ເຂົ້າຮ່ວມກອງປະຊຸມທາງການບ່ອນທີ່ມີການທົບທວນຜົນການປະເມີນ ແລະ ກຳນົດການມີສິດໄດ້ຮັບການບໍລິການ. ຖ້ານັກຮຽນມີສິດໄດ້ຮັບການບໍລິການການສຶກສາພິເສດ, ຫຼັກສູດການສຶກສາສະເພາະບຸກຄົນຈະຖືກພັດທະນາຂຶ້ນ.


*ບາງຂໍ້ມູນ ທີ່ລວມຢູ່ໃນປຶ້ມຄູ່ມືຫົວນີ້ ອາດຈະໃຊ້ບໍ່ໄດ້ໃນຊ່ວງການຮຽນທາງໄກ. ກະລຸນາເຂົ້າເບິ່ງເວັບໄຊ U-46 Covid-19* **https://www.u-46.org/Page/15532** *ຫລື ຕິດຕໍ່ຫາອາຈານໃຫຍ່ໂຮງຮຽນຂອງທ່ານ ສຳລັບຂໍ້ມູນໃໝ່ໆ.*

# U-46 ການບໍລິການນັກຮຽນແບບພິເສດ

**ຂໍ້ມູນຕິດຕໍ່**

**ໂທລະສັບ:** (847) 888 - 5000 ຕໍ່ສາຍ 5065
**ສະຖານທີ່:** 355 E. Chicago St., Elgin, IL 60120

ການບໍລິການນັກຮຽນແບບພິເສດແມ່ນສ່ວນໜຶ່ງທີ່ຂາດບໍ່ໄດ້ຂອງຫຼັກສູດທັງໝົດທີ່ສະໜອງໃຫ້ເພື່ອຮັບໃຊ້ນັກຮຽນໃນເຂດການສຶກສາ U-46. ພະນັກງານການບໍລິການນັກຮຽນແບບພິເສດ ແລະ ພະນັກງານການສຶກສາທົ່ວໄປເຮັດວຽກຮ່ວມກັນເພື່ອຕອບສະໜອງຄວາມຕ້ອງການຂອງນັກຮຽນທຸກຄົນຂອງພວກເຮົາ.

ຫຼັກສູດ ແລະ ການບໍລິການມີຄວາມຕໍ່ເນື່ອງຢ່າງຄົບຖ້ວນເພື່ອຕອບສະໜອງຄວາມຕ້ອງການສະເພາະຂອງນັກຮຽນທີ່ມີຄວາມພິການໃນລະຫວ່າງອາຍຸ 3 ແລະ 21 ປີ. ຄູ່ມືສຳລັບພໍ່ແມ່ຖືກສະໜອງໃຫ້ໂດຍຄະນະກຳມະການການສຶກສາຂອງລັດ Illinois. ປຶ້ມຄູ່ມືຫຼັ້ມນີ້ໃຫ້ຂໍ້ມູນກ່ຽວກັບສິດທິ ແລະ ຄວາມຮັບຜິດຊອບໃນການສຶກສາຂອງພໍ່ແມ່ທີ່ກ່ຽວຂ້ອງກັບການນຳສົ່ງ, ການມີສິດທິ, ຫຼັກສູດ, ການບໍລິການ ແລະ ການມີສ່ວນຮ່ວມຂອງພໍ່ແມ່. ສຳເນົາຂອງຄູ່ມືສຳລັບພໍ່ແມ່ສາມາດຖືກຊອກພົບໄດ້ໃນເວັບໄຊການບໍລິການນັກຮຽນສະເພາະຂອງເຂດການສຶກສາ U-46.

## ຄວາມຕໍ່ເນື່ອງຂອງທາງເລືອກຫຼັກສູດ

ເຂດການສຶກສາ U-46 ມີທາງເລືອກທີ່ມີຄວາມຕໍ່ເນື່ອງຢ່າງຄົບຖ້ວນຂອງຫຼັກສູດການສອນການສຶກສາພິເສດ, ໂຄງການແຫຼ່ງຄວາມຊ່ວຍເຫຼືອ ແລະ ການບໍລິການທີ່ກ່ຽວຂ້ອງ ໂດຍອີງໃສ່ລັກສະນະ ແລະ ລະດັບຂອງການແຊກແຊງຊ່ວຍເຫຼືອທີ່ຈຳເປັນສຳລັບນັກຮຽນ.

ຄວາມຕໍ່ເນື່ອງທີ່ຄົບຖ້ວນຂອງເຂດການສຶກສາ U-46 ເລີ່ມແຕ່ທາງເລືອກທີ່ຈຳກັດໜ້ອຍສຸດຫາຫຼາຍສຸດຕາມທີ່ລະບຸໄວ້ຂ້າງລຸ່ມ:




- **ການສຶກສາທົ່ວໄປ** (ໂດຍມີການປັບປ່ຽນແກ້ໄຂ)
- **ການສຶກສາທົ່ວໄປ** (ໂດຍມີການປຶກສາຫາລືກັບພະນັກງານ)
- **ຫ້ອງຮຽນສອນຄວບ** (ຄູສອນການສຶກສາທົ່ວໄປ ແລະ ການສຶກສາພິເສດທີ່ໃຫ້ການບໍລິການ)
- **ຫຼັກສູດແຫຼ່ງຂໍ້ມູນ** (20-50% ໃນມື້ເຂົ້າຮຽນຫຼັກສູດການສຶກສາພິເສດ ແລະ ການບໍລິການ)
- **ຫຼັກສູດສິດສອນ- ສະຖານທີ່ໂຮງຮຽນລັດຖະບານ**
- (50% ໃນມື້ການຮຽນຂອງຫຼັກສູດການສຶກສາພິເສດ ແລະ ການບໍລິການ)
- **ຫຼັກສູດກາງເວັນພາກລັດຖະບານ**
- **ຫຼັກສູດກາງເວັນພາກເອກະຊົນ**

## ການມີສິດ


*ບາງຂໍ້ມູນ ທີ່ລວມຢູ່ໃນປຶ້ມຄູ່ມືຫົວນີ້ ອາດຈະໃຊ້ບໍ່ໄດ້ໃນຊ່ວງການຮຽນທາງໄກ. ກະລຸນາເຂົ້າເບິ່ງເວັບໄຊ U-46 Covid-19* ***https://www.u-46.org/Page/15532*** *ຫລື ຕິດຕໍ່ຫາອາຈານໃຫຍ່ໂຮງຮຽນຂອງທ່ານ ສຳລັບຂໍ້ມູນໃໝ່ໆ.*

ການສະເໜີແນະກ່ຽວກັບການມີສິດໄດ້ຮັບຖືກເຮັດໂດຍຄວາມເຫັນສ່ວນໃຫຍ່ຂອງພະນັກງານໂຮງຮຽນລັດຖະບານຜູ້ທີ່ເຂົ້າຮ່ວມກອງປະຊຸມພະນັກງານຫຼາຍຝ່າຍ. ເພື່ອໃຫ້ມີສິດໄດ້ຮັບການບໍລິການ, ນັກຮຽນຕ້ອງຖືກພົບວ່າມີໜຶ່ງ ຫຼື ຫຼາຍລັກສະນະພິເສດເຊິ່ງສົ່ງຜົນກະທົບທີ່ບໍ່ດີຕໍ່ກັບຜົນການຮຽນຂອງລາວ ແລະ ຈໍາເປັນຕ້ອງມີການສຶກສາພິເສດ ແລະ ການບໍລິການທີ່ກ່ຽວຂ້ອງ. ຖ້າບໍ່ມີຜົນກະທົບທີ່ບໍ່ດີຕໍ່ກັບຜົນການຮຽນທີ່ເກີດຈາກລັກສະນະພິເສດໃດໜຶ່ງ, ນັກຮຽນຈະບໍ່ມີສິດໄດ້ຮັບການສຶກສາພິເສດ ແລະ ການບໍລິການທີ່ກ່ຽວຂ້ອງ.

## ຫຼັກສູດ ແລະ ການບໍລິການ



### ຫຼັກສູດຂ້າມປະເພດ

ໃຫ້ການບໍລິການດ້ານການສຶກສາ ແລະ ການສະໜັບສະໜູນໃຫ້ແກ່ນັ້ນຮຽນຊັ້ນອະນຸບານຫາຊັ້ນຮຽນທີ 12 ທີ່ຖືກລະບຸໄວ້ວ່າຂາດດຸນຜົນສໍາເລັດດ້ານການຮຽນ. ມີຫຼັກສູດການສິດສອນ ແລະ ແຫຼ່ງຊ່ວຍເຫຼືອສໍາລັບນັກຮຽນທີ່ມີສິດໄດ້ຮັບການບໍລິການການສຶກສາພິເສດພາຍໃຕ້ເງື່ອນໄຂການມີສິດທິທາງດ້ານການສຶກສາຫຼາຍເງື່ອນໄຂ.

ຫລັກສູດປະເພດຂ້າມສອງພາສາ ແມ່ນມີພ້ອມທັງໃນລະດັບປະຖົມ ແລະ ມັດທະຍົມ.

ນັກຮຽນສຶກສາພິເສດທີ່ເຂົ້າຮຽນຢູ່ຫລັກສູດດັ່ງກ່າວ ຈະຮັບເອົາການສິດສອນສອງພາສາ ແລະ ການຊ່ວຍເຫລືອດ້ານພາສາ ອີງຕາມຄວາມຕ້ອງການສະເພາະບຸກຄົນ ແລະ ເປົ້າໝາຍ IEP. ຄວາມຫລາກຫລາຍຂອງຍຸດທະສາດແກນຫລັກ ແມ່ນຈະຖືກນໍາໃຊ້ ເພື່ອຕອບສະໜອງກັບຄວາມຕ້ອງການດ້ານການສຶກສາພິເສດ ແລະ ພາສາຂອງນັກຮຽນ. ທີມງານ IEP ຈະກວດເບິ່ງຂໍ້ມູນ ປະຈໍາປີ ເພື່ອກໍານົດການຂຽນຫລັກສູດສໍາລັບປີສຶກຮຽນຕໍ່ໄປ.

### ການສິດສອນແບບຮ່ວມ

